# ຄູ່ມືແນະນຳວຽກງານຝຶກຫັດວິຊາຊີບຄູ

## I. ຈຸດປະສົງລະດັບຄາດໝາຍ

1. ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ 4 ບຸກທະລຸຂອງຂະແໜງການສຶກສາ ແລະ ກິລາ;
2. ເພື່ອປະຕິບັດຕາມແຜນຍຸດທະສາດການສ້າງຄູ ແລະ ຫຼັກສູດ ການຮຽນ-ການສອນ ຂອງວິທະຍາໄລຄູສົງອິງຕົ໊;
3. ເພື່ອແນະນຳວິທີການປະຕິບັດວຽກງານຝຶກຫັດວິຊາຊີບຄູ ແກ່ນັກສຶກສາຄູຝຶກຫັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ເປັນເອກະພາບ, ຖືກຕ້ອງ, ໄດ້ປະສິດທິພາບ ແລະ ປະສິດທິຜົນຕາມແຜນການ.

## II. ເນື້ອໃນວຽກງານຝຶກຫັດວິຊາຊີບຄູ

ເນື້ອໃນວຽກງານຝຶກວິຊາຊີບຄູແມ່ນວິຊາໜຶ່ງທີ່ບັນຈຸຢູ່ໃນກຸ່ມວິທີສິດສອນທີ່ກຳນົດໄວ້ໃນຫຼັກສູດທຸກສາຍຮຽນຂອງວິທະຍາໄລຄູສົງອິງຕົ໊ ເປັນການສືບຕໍ່ຈາກວິຊາປະສົບການໃນໂຮງຮຽນ 1, 2, 3 ລວມມີ 12 ໜ່ວຍກິດເຊິ່ງປະກອບດ້ວຍ 4 ວຽກດັ່ງນີ້:

1. ວຽກງານສິດສອນ
2. ວຽກງານຄູປະຈຳຫ້ອງ
3. ວຽກງານຊຸມຊົນ
4. ວຽກງານວິໄຈໃນຫ້ອງຮຽນ

## III. ການປະຕິບັດວຽກງານຝຶກຫັດວິຊາຊີບຄູ

❖ **ການຝຶກຫັດວິຊາຊີບຄູແບ່ງເປັນ 3 ໄລຍະຄື:**

1. **ໄລຍະທີ 01: ກະກຽມຢູ່ວິທະຍາໄລຄູສົງອິງຕົ໊ (ເລີ່ມແຕ່ເດືອນ ຕຸລາ ເຖິງ ເດືອນ ກຸມພາ ຂອງປີຕໍ່ໄປ).**
   - ➢ ຄັດເລືອກເປົ້າໝາຍໂຮງຮຽນທີ່ຈະລົງຝຶກຫັດ ແລະ ສະເໜີຂໍອະນຸມັດອອກ ຂໍ້ຕົກລົງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານ ກົມສ້າງຄູ.
   - ➢ ປະຖົມນິເທດວຽກງານຝຶກຫັດວິຊາຊີບຄູ (ວິທະຍາໄລຄູສົງອິງຕົ໊, ນັກສຶກສາຄູ ແລະ ຄູສາມັນ).
   - ➢ ເລືອກຫົວຂໍ້ວິໄຈໃນຫ້ອງຮຽນ (ນັກສຶກສາສົມທົບກັບຄູທີ່ປຶກສາ).
2. **ໄລຍະທີ 02: ລົງຝຶກຫັດວິຊາຊີບຄູຕົວຈິງຢູ່ໂຮງຮຽນສາມັນສຶກສາສົງ (ເວລາ 10 ອາທິດ).**

**2.1. ອາທິດທີ 1:**

- **ວຽກງານສິດສອນ** :ພົວພັນກັບຄູປະຈຳວິຊາ, ສຶກສາຕຳລາ, ສ້າງແຜນການສອນໄລຍະຍາວຂອງແຕ່ລະວິຊາ ແຕ່ລະຊັ້ນຮຽນ, ຮ່ວມໂມງສອນ, ແຕ່ງບົດສອນ, ສ້າງຊື່ການສອນ ແລະ ຜ່ານບົດສອນ (ເປົ້າໝາຍຫ້ອງສອນໂຕຈິງ ຊັ້ນ ມ 3 ,2 ,1ແລະ ຊັ້ນ ມ ,5 6).
- **ວຽກງານຄູປະຈຳຫ້ອງ:** ຮ່ວມສຳຫຼວດຫ້ອງ ແລະ ມອບ-ຮັບ ວຽກຄູປະຈຳຫ້ອງ.
- **ວຽກງານຊຸມຊົນ:** ຮັບຟັງການລາຍງານສະພາບຂອງໂຮງຮຽນສາມັນຈາກຄະນະອຳນວຍການ ແລະ ຄະນະພັດທະນາການສຶກສາຂັ້ນບ້ານວັດ/ ແລະ ນຳສະເໜີແຜນງານຝຶກຫັດວິຊາຊີບຄູໝົດຊຸດຝຶກຫັດ ແລະ ກຸ່ມ ຕໍ່ຄະນະອຳນວຍການໂຮງຮຽນສາມັນສົງ, ຄະນະພັດທະນາການສຶກສາຂັ້ນບ້ານ ວັດ/ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**2.2. ອາທິດທີ 2 ຫາ 9:**

- **ວຽກງານສິດສອນ:** ແຕ່ງບົດສອນ, ສ້າງສື່ການສອນ, ສອນທົດລອງ ແລະ ຖອດຖອນບົດຮຽນ, ສອນເອົາຄະແນນ ແລະ ປະເມີນຜົນການຮຽນຂອງນັກຮຽນ.

- **ວຽກງານຄູປະຈຳຫ້ອງ:**
    1. ສ້າງແຜນການເຄື່ອນໄຫວ, ສ້າງໂຄງຮ່າງການຈັດຕັ້ງຫ້ອງ, ປະດັບປະດາພາຍໃນຫ້ອງ ແລະ ນອກຫ້ອງ.
    2. ນຳພານັກຮຽນເຂົ້າຮ່ວມການເຄົາລົບທຸງ ໂດຍຜັດປ່ຽນກັນຮັບຜິດຊອບພາຍໃນກຸ່ມຄູຝຶກຫັດດ້ວຍກັນ.
    3. ນຳພາເຄື່ອນໄຫວວຽກງານຂອງຫ້ອງຕາມແຜນ, ສັງລວມຄະແນນແຕ່ລະເດືອນ ແລະ ຄິດໄລ່ວັນຂາດຮຽນຂອງນັກຮຽນ.
    4. ເກັບກຳຂໍ້ມູນນັກຮຽນພິເສດ, ພົວພັນກັບຄູອາຈານທີ່ກ່ຽວຂ້ອງ ແລະ ພໍ່ແມ່ນັກຮຽນ ຄະນະປົກຄອງ/ເຈົ້າອະທິການວັດ ເພື່ອໃຫ້ການຊ່ວຍເຫຼືອ.
    5. ນຳພາອະນາໄມຫ້ອງຮຽນ, ອອກແຮງງານ, ຂ່າວສານ...
    6. ສຳຫຼວດຫ້ອງ, ສຶກສາແນວຄິດໃຫ້ແກ່ນັກຮຽນ ແລະ ຈັດຕັ້ງບຳລຸງນັກຮຽນທີ່ຮຽນອ່ອນ.
    7. ສະຫຼຸບການປະຕິບັດວຽກງານຕາມແຜນ (ປະຈຳອາທິດ ແລະ ປະຈຳເດືອນ).
- **ວຽກງານຊຸມຊົນ** :ສ້າງແຜນເຄື່ອນໄຫວ, ແບ່ງໜ້າທີ່ຮັບຜິດຊອບໃຫ້ແຕ່ລະອົງ, ນຳເອົາແຜນການໄປຈັດຕັ້ງປະຕິບັດ, ສະຫຼຸບ ແລະ ລາຍງານໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ.
- **ວຽກງານວິໄຈໃນຫ້ອງຮຽນ:** ຮັບຟັງການລາຍງານສະພາບບັນຫາການຮຽນ-ການສອນຈາກຄູສອນ, ສຶກສາສະພາບບັນຫາ, ເລືອກຫົວຂໍ້ ໂດຍຜ່ານການເຫັນດີຈາກຄູທີ່ປຶກສາ, ວາງແຜນການວິໄຈ (ເລືອກກຸ່ມເປົ້າໝາຍ ເພື່ອວິໄຈ), ນຳສະເໜີແຜນຕໍ່ຄະນະອຳນວຍການໂຮງຮຽນສາມັນ, ເກັບກຳຂໍ້ມູນ ແລະ ດຳເນີນການຂຽນບົດວິໄຈ (ຕາມໂຄງຮ່າງທີ່ກຳນົດໄວ້).

**2.3. ອາທິດທີ 10:** ນັກສຶກສາຄູຝຶກຫັດ ສົ່ງ-ມອບວຽກງານຝຶກຫັດວິຊາຊີບຄູ ແລະ ສະຫຼຸບບົ້ນລົງຝຶກຫັດ.

**3. ໄລຍະທີ 03: ພາຍຫຼັງສຳເລັດການຝຶກຫັດວິຊາຊີບຄູ.**

- ນັກສຶກສາຄູສືບຕໍ່ຂຽນບົດວິໄຈໃນຫ້ອງຮຽນ ພ້ອມທັງກວດຜ່ານນຳຄູທີ່ປຶກສາ.
- ກຽມເນື້ອໃນ ເພື່ອປ້ອງກັນບົດ.
- ປັບປຸງບົດວິໄຈ ແລະ ເຊັນຜ່ານຄະນະກຳມະການ.
- ສະຫຼຸບ ແລະ ຖອດຖອນບົດຮຽນການປ້ອງກັນບົດວິໄຈໃນຫ້ອງຮຽນ (ມອບໃຫ້ຄະນະກຳມະການປ້ອງກັນບົດແຕ່ລະກຸ່ມຮັບຜິດຊອບ).

**ໝາຍເຫດ:** ລາຍລະອຽດວຽກງານຝຶກຫັດວິຊາຊີບຄູ 4 ໜ້າວຽກຫຼັກ ຢູ່ໃນແຜນການເຄື່ອນໄຫວວຽກງານຝຶກຫັດວິຊາຊີບຄູ.

# <u>ຮ່າງ ບົດລາຍງານ ແລະ ແບບປະເມີນຂອງແຕ່ລະວຽກງານ</u>

## ກ. ການປະເມີນວຽກງານສິດສອນ (ໃຫ້ຄະແນນເປັນບຸກຄົນ 60%)

1. **ການກະກຽມກ່ອນຈະຂຶ້ນຫ້ອງສອນ.**

ກ່ອນຈະຂຶ້ນຫ້ອງສອນນັກຮຽນຄູຕ້ອງຄົ້ນຄວ້າຫຼັກສູດ, ສຶກສາປຶ້ມຄູ່ມືຄູ, ປຶ້ມແບບຮຽນ, ຜ່ານແຜນການສອນໄລຍະສັ້ນ (ບົດສອນ) ສ້າງສື່ການສອນ, ສອນທົດລອງ ແລະ ຖອດຖອນບົດຮຽນ.

2. **ຕາຕາລາງກຳນົດການໃຫ້ຄະແນນ.**

<table>
<tr><th>ວິຊາ</th><th>ຈຳນວນຄັ້ງ/ຊົ່ວໂມງ</th><th>ຜູ້ໃຫ້ຄະແນນ</th><th>ໝາຍເຫດ</th></tr>
<tr><td>ປາລີ</td><td>8 ຄັ້ງ,1 ຄັ້ງ/ 2 ຊ.ມ</td><td></td><td rowspan="5">ນັກສຶກສາຄູຝຶກຫັດທຸກຄົນຕ້ອງສອນຕົວຈິງຕ່ຳສຸດບໍ່ໃຫ້ຫຼຸດ 40 - 50 ຊ.ມ.<br>ສຳລັບວິຊາເລືອກ 2 ຄັ້ງຄູປະຈຳວິຊາສາມັນປະເມີນ.<br>ສຳລັບວິຊາສະເພາະ 4 ຄັ້ງທຳອິດຄູປະຈຳວິຊາ, 3 ຄັ້ງ ຕໍ່ມາຄູປະຈຳວິຊາ-ຄູ ວຄສ ແລະ 3 ຄັ້ງສຸດທ້າຍແມ່ນ ຄູປະຈຳວິຊາ ແລະ ວຄສ. ທຸກໆວິຊາຕ້ອງນຳໃຊ້ເຄື່ອງທົດລອງ I C T ແລະ ນຳໃຊ້ເຄື່ອງອຸປະກອນທີ່ງ່າຍດາຍ.<br>1. ຄັ້ງນຳໃຊ້ເຄື່ອງທົດລອງ<br>2. ຄັ້ງນຳໃຊ້ເຄື່ອງ ICT<br>3. ຄັ້ງນຳໃຊ້ເຄື່ອງອຸປະກອນທີ່ງ່າຍດາຍ</td></tr>
<tr><td>ພາສາລາວ</td><td>8 ຄັ້ງ,1 ຄັ້ງ/ 2 ຊ.ມ</td><td></td></tr>
<tr><td>ທັມມະ</td><td>8 ຄັ້ງ,1 ຄັ້ງ/ 2 ຊ.ມ</td><td></td></tr>
<tr><td>ພາສາອັງກິດ</td><td>8 ຄັ້ງ,1 ຄັ້ງ/ 2 ຊ.ມ</td><td></td></tr>
<tr><td>ວັນນະຄະດີ</td><td>8 ຄັ້ງ,1 ຄັ້ງ/ 2 ຊ.ມ</td><td></td></tr>
<tr><td>ວິຊາເລືອກ</td><td>2 ຄັ້ງ,1 ຄັ້ງ/ 2 ຊ.ມ</td><td></td><td>ຄູສາມັນ</td></tr>
</table>

**ຮ່າງທີ 01:**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສຶກສາທິການ ແລະ ກິລາ ແຂວງ……………….

ຫ້ອງການສຶກສາທິການ ແລະ ກິລາ ເມືອງ…………..

ໂຮງຮຽນ................................................ ເລກທີ: ........./....

ທີ່ ............................., ວັນທີ...................... 20....

# ໃບເກັບກຳຄະແນນສອບຂອງນັກສຶກສາຄູຝຶກຫັດ

ຊື່ ແລະ ນາມສະກຸນ:.............................................................................................

ຂະບວນຝຶກຫັດ:....................................................................................................

ສາຍຮຽນ...........................................................................................................

ສົກຮຽນ.........................., ລະຫັດນັກສຶກສາ.........................................................

| ລ/ດ | ວິຊາ | ຄະແນນ | | | | | | | | | | ສະເລ່ຍ |
|---|---|---|---|---|---|---|---|---|---|---|---|---|
| | | ຄູປະຈຳວິຊາ | | | | ຄູ ວຄສ. | | | ຄູ ວຄສ. - ຄູປະຈຳວິຊາ | | | |
| | | ຄະແນນ/ຄັ້ງ | | | | ຄະແນນ/ຄັ້ງ | | | ຄະແນນ/ຄັ້ງ | | | |
| | | 1 | 2 | 3 | 4 | 1 | 2 | 3 | 1 | 2 | 3 | |
| 1 | | | | | | | | | | | | |
| 2 | | | | | | | | | | | | |
| 3 | | | | | | | | | | | | |
| 4 | | | | | | | | | | | | |
| 5 | | | | | | | | | | | | |
| | | **ຄະແນນສະເລ່ຍ 60%** | | | | | | | | | | |

ວັນທີ.........................20....

ຜູ້ອຳນວຍການໂຮງຮຽນສາມັນສຶງ ຄູປະຈຳວິຊາວິທະຍາໄລຄູສົງອິງເຕົ້ ຄູປະຈຳວິຊາໂຮງຮຽນສາມັນສຶງ

<u>ຮ່າງທີ 02:</u>

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ
ວິທະຍາໄລຄູສົງອົງຕື້ ເລກທີ ............../ວຄສ.ອຕ.ພກ
ນະຄອນຫຼວງວຽງຈັນ, ວັນທີ.........................20.....

# ໃບເກັບກຳຄະແນນສອບຂອງນັກສຶກສາຄູຝຶກຫັດ

ຊື່ ແລະ ນາມສະກຸນ:.......................................................................................
ຂະບວນຝຶກຫັດ..............................................................................................
ສາຍຮຽນ.....................................................................................................
ສົກຮຽນ.........................., ລະຫັດນັກສຶກສາ: ...........................................................

| ລ/ດ | ວິຊາ | ຄະແນນ | | | | | | | | | | ສະເລ່ຍ |
|---|---|---|---|---|---|---|---|---|---|---|---|---|
| | | ຄູປະຈຳວິຊາ | | | | ຄູ ວຄສ. | | | ຄູ ວຄສ-ຄູ ປະຈຳວິຊາ | | | |
| | | ຄະແນນ/ຄັ້ງ | | | | ຄະແນນ/ຄັ້ງ | | | ຄະແນນ/ຄັ້ງ | | | |
| | | 1 | 2 | 3 | 4 | 1 | 2 | 3 | 1 | 2 | 3 | |
| 1 | | | | | | | | | | | | |
| 2 | | | | | | | | | | | | |
| 3 | | | | | | | | | | | | |
| 4 | | | | | | | | | | | | |
| 5 | | | | | | | | | | | | |
| **ຄະແນນສະເລ່ຍ 60%** | | | | | | | | | | | | |

ທີ່.........................,ວັນທີ.....................20.....

ຜູ້ອຳນວຍການວິທະຍາໄລຄູສົງອົງຕື້ ຄູປະຈຳວິຊາວິທະຍາໄລຄູສົງອົງຕື້

**ຮ່າງທີ 03:**

## ການປະເມີນການສອນ

- ຊື່ຄູຝຶກຫັດ:..........................................................ສາຍຮຽນ............................................
- ຂະບວນຝຶກຫັດ................................................... ສົກຮຽນ ................................................
- ວິຊາສອນ:...........................................ຊັ້ນ/ຫ້ອງສອນ..............ເວລາ.................ນາທີ..............
- ບົດທີ:.............ຫົວຂໍ້.......................................................................................................
- ປະເມີນຄັ້ງທີ.........................................ວັນທີ,ເດືອນ,ປີ.......................................................

| ລ/ດ | ເນື້ອໃນການປະເມີນ | ຄະແນນ | |
|---|---|---|---|
| | | ເຕັມ | ໄດ້ |
| **I. ການກະກຽມການສອນ:** | | | |
| 01 | ກຽມບົດສອນ ແລະ ຜ່ານບົດສອນຕາມກຳນົດເວລາ. | 10 | |
| 02 | ຈຸດປະສົງສາມາດປະເມີນໄດ້ ແລະ ສອດຄ່ອງກັບເນື້ອໃນບົດຮຽນ. | 10 | |
| 03 | ກິດຈະກຳການສອນສອດຄ່ອງກັບຈຸດປະສົງ ແລະ ເນື້ອໃນບົດຮຽນ. | 10 | |
| 04 | ອຸປະກອນ ແລະ ສື່ການຮຽນ-ການສອນ (ICT) ສອດຄ່ອງກັບເນື້ອໃນບົດຮຽນ. | 10 | |
| 05 | ການນຸ່ງຖືຖືກຕາມລະບຽບ. | 10 | |
| **II. ການນຳເຂົ້າສູ່ບົດຮຽນ:** | | | |
| 06 | ຈັດຕັ້ງຫ້ອງເຊັ່ນ: ກວດກາຈຳນວນພົນ, ແນະນຳແຂກ (ຖ້າມີ).... | 10 | |
| 07 | ຈັດສະພາບຫ້ອງຮຽນ ແລະ ນັກຮຽນໃຫ້ເປັນລະບຽບກ່ອນການສອນ. | 10 | |
| 08 | ທວນຄືນບົດຮຽນເກົ່າ. | 10 | |
| 09 | ການນຳເຂົ້າສູ່ບົດຮຽນໃໝ່ມີຄວາມເໝາະສົມ. | 10 | |
| **III. ການສອນບົດໃໝ່:** | | | |
| 10 | ອະທິບາຍ ເຂົ້າໃຈງ່າຍ ແລະ ຈະແຈ້ງ-ຊັດເຈນ. | 10 | |
| 11 | ມີກິດຈະກຳການຮຽນຮູ້ສິ່ງໃໝ່ໆທີ່ຫຼາກຫຼາຍ. | 10 | |
| 12 | ມີວິທີການກະຕຸ້ນຄວາມສົນໃຈຂອງນັກຮຽນ. | 10 | |
| 13 | ການຄວບຄຸມຫ້ອງ. | 10 | |
| 14 | ການມີສ່ວນຮ່ວມໃນກິດຈະກຳຕ່າງໆຂອງນັກຮຽນ. | 10 | |

| | | | |
|---|---|---|---|
| 15 | ແນະນຳ ແລະ ຊ່ວຍເຫຼືອ ນັກຮຽນມີສ່ວນຮ່ວມໃນກິດຈະກຳຕ່າງໆ. | 10 | |
| 16 | ບັນຍາກາດໃນການຮຽນ-ການສອນ. | 10 | |
| 17 | ເຕັກນິກການນຳໃຊ້ຄຳຖາມຈະແຈ້ງ-ຊັດເຈນ ຖືກກັບເນື້ອໃນຂອງບົດຮຽນ. | 10 | |
| 18 | ທັກສະການໃຊ້ກະດານ. | 10 | |
| 19 | ການນຳໃຊ້ ອຸປະກອນ/ສື່ການສອນ (ICT). | 10 | |
| 20 | ການເວົ້າ ແລະ ຂຽນຖືກຕາມຫຼັກໄວຍາກອນ. | 10 | |
| 21 | ສຽງເວົ້າຈະແຈ້ງ ແລະ ເໝາະສົມ. | 10 | |
| 22 | ການປະຕິບັດເວລາເໝາະສົມ. | 10 | |
| **IV. ການສະຫຼຸບ:** | | | |
| 23 | ສະຫຼຸບໃຈຄວາມສຳຄັນຂອງບົດຮຽນ. | 10 | |
| **V. ການວັດ ແລະ ປະເມີນຜົນ:** | | | |
| 24 | ມີວິທີການປະເມີນທີ່ເໝາະສົມກັບເນື້ອໃນສຳຄັນຂອງບົດຮຽນ. | 10 | |
| **VI. ການຕັກເຕືອນ:** | | | |
| 25 | ມອບວຽກບ້ານ ແລະ ຕັກເຕືອນໃຫ້ນັກຮຽນ. | 10 | |
| **ລວມຄະແນນ: ເຕັມ/ຄະແນນທີ່ໄດ້ຕົວຈິງ** | | **250** | |
| **ຄິດເປັນເປີເຊັນ** | | **60%** | |

ທີ່ ............................................ວັນທີ...............................20.....

ເຊັນຜູ້ປະເມີນ: ...............................

ຊື່ແຈ້ງ: ..........................................

# ວິທີຄິດໄລ່ຄະແນນ ການປະເມີນການສອນ

❖ ເອົາຄະແນນໄດ້ຕົວຈິງ ຄູນໃຫ້ 60% ແລ້ວຫານໃຫ້ຄະແນນເຕັມ 250 ຜົນອອກມາເປັນຄະແນນໂຕຈິງຂອງວຽກງານສິດສອນ.

$$\frac{\text{ຄະແນນໄດ້ຕົວຈິງ x 60\%}}{250} = \text{.................. ຄະແນນໂຕຈິງ}$$

**<u>ຕົວຢ່າງ:</u>** ຜົນການປະເມີນການສອນ, ວິຊາ ພາສາລາວ: ພຣະ ກ ໍ ໄດ້ 220 ຄະແນນ; ຄິດໄລ່ດັ່ງນີ້:

$$\frac{220 \text{ x } 60\%}{250} = 52{,}8\%$$ ພຣະ ກ ໍ ໄດ້ຄະແນນສິດສອນ, ວິຊາ ພາສາລາວ 52,8%

❖ **ຄຳແນະນຳ**

- ຜົນການປະເມີນການສອນມີ 25 ລາຍການ, ແຕ່ລະລາຍການໃຫ້ຄະແນນແຕ່ 1-10.
- ເກນໃຫ້ຄະແນນມີດັ່ງນີ້:
  - ຄະແນນ 10 = ດີເລີດ
  - ຄະແນນ 9 = ດີຫຼາຍ
  - ຄະແນນ 7-8 = ດີ
  - ຄະແນນ 5-6 = ປານກາງ
  - ຄະແນນ 3-4 = ອ່ອນ
  - ຄະແນນ 1-2 = ໃຊ້ການບໍ່ໄດ້
- ຄູ-ອາຈານວິຊາສະເພາະ/ປະຈຳວິຊາໂຮງຮຽນສາມັນສິງບ່ອນຝຶກຫັດ ແລະ ຈາກວິທະຍາໄລຄູສົງອົງຕື້ ເປັນຜູ້ປະເມີນການສອນໃຫ້ແກ່ຄູຝຶກຫັດຕາມການຂຶ້ນຫ້ອງສິດສອນໂຕຈິງຂອງນັກສຶກສາຄູຝຶກຫັດ.
- ການປະເມີນການສອນໃຫ້ປະຕິບັດຕາມຄາດໝາຍຂອງກົມສ້າງຄູວາງອອກຄື: ອາຈານວິຊາສະເພາະ/ອາຈານປະຈຳວິຊາຈາກໂຮງຮຽນສາມັນສົງປະເມີນ 4 ຄັ້ງ, ອາຈານວິຊາສະເພາະ/ອາຈານປະຈຳວິຊາຈາກວິທະຍາໄລຄູສົງອົງຕື້ປະເມີນ 3 ຄັ້ງ, ອາຈານວິຊາສະເພາະ/ອາຈານປະຈຳວິຊາຈາກໂຮງຮຽນສາມັນສົງກັບອາຈານຈາກວິທະຍາໄລຄູສົງອົງຕື້ ປະເມີນຮ່ວມກັນ 3 ຄັ້ງ ຫຼື ປະຕິບັດຕາມເງື່ອນໄຂໂຕຈິງທີ່ອາດເປັນໄປໄດ້ ຕາມຄວາມເໝາະສົມ.
- ໃຫ້ຄູ-ອາຈານວິຊາສະເພາະ/ອາຈານປະຈຳວິຊາແຕ່ລະພາກສ່ວນ ຈັດຕັ້ງການຖອດຖອນບົດຮຽນ ໃຫ້ແກ່ນັກສຶກສາຄູຝຶກຫັດໂດຍທັນທີ ພາຍຫຼັງທີ່ເຂົ້າຮ່ວມຊົ່ວໂມງສອນ-ປະເມີນການສອນ ໃນແຕ່ລະຄັ້ງ ເພື່ອໃຫ້ນັກສຶກສາຄູຝຶກຫັດມີບົດຮຽນ ແລະ ປະຕິບັດໃຫ້ດີກ່ວາເກົ່າ ໃນການຂຶ້ນຫ້ອງສອນໃນຊົ່ວໂມງຕໍ່ໄປ.
- ຫລັງຈາກສຳເລັດການປະເມີນແຕ່ລະຄັ້ງ ໃຫ້ຄູວິຊາສະເພາະບັນທຶກຄະແນນໃສ່ໃບເກັບກຳຄະແນນຂອງນັກສຶກສາຄູຝຶກຫັດແຕ່ລະອົງ ຄົບຖ້ວນແລ້ວສົ່ງໃບເກັບກຳຄະແນນໃຫ້ຄະນະຮັບຜິດຊອບວຽກງານຝຶກຫັດວິຊາຊີບຄູປະຈຳໂຮງຮຽນສາມັນສົງ ໃນອາທິດທີ 09 ຂອງບັ້ນຝຶກຫັດ.
- ອາທິດທີ 10 ຂອງບັ້ນຝຶກຫັດໃຫ້ແຕ່ລະພາກສ່ວນສົ່ງຜົນການປະເມີນແຕ່ລະວິຊາພ້ອມທັງໃບເກັບກຳຄະແນນໃຫ້ຄະນະກອງເລຂາວຽກງານຝຶກຫັດ ເພື່ອສະຫຼຸບສັງລວມວຽກງານຝຶກຫັດຕາມກຳນົດເວລາ.

## ຂ. ການປະເມີນວຽກຄູປະຈຳຫ້ອງ (ໃຫ້ຄະແນນເປັນກຸ່ມ 15%).

**ຮ່າງທີ 04:**

### ແຜນວຽກປະຈຳອາທິດທີ........

ຊື່ ແລະ ນາມສະກຸນ : 1...................................

2..............................

3..............................

- ຫ້ອງ:.......................
- ເລີ່ມແຕ່ວັນທີ....../....../............ຫາ ວັນທີ....../......./...........

| ວັນ | ວ.ດ.ປ | ວຽກສິດສອນ | ວຽກຄູປະຈຳຫ້ອງ | ວຽກຊຸມຊົນ | ວຽກວິໄຈ | ໝາຍເຫດ |
|---|---|---|---|---|---|---|
| ເສົາ | | | | | | |
| ທິດ | | | | | | |
| ຈັນ | | | | | | |
| ອັງຄານ | | | | | | |
| ພຸດ | | | | | | |
| ພະຫັດ | | | | | | |
| ສຸກ | | | | | | |

ທີ່................., ວັນທີ........./......./..........

ຄູປະຈຳຫ້ອງ ຫົວໜ້າກຸ່ມ

**ໝາຍເຫດ:**

- ໃນແຕ່ລະອາທິດຕ້ອງມີແຜນປະຈຳອາທິດ ແລະ ສະຫຼຸບແຜນປະຈຳອາທິດສົ່ງໃຫ້ຄູປະຈຳຫ້ອງປະເມີນ (ແຜນອາທິດທີ 2 ຕ້ອງສົ່ງໃນວັນສຸກຂອງອາທິດທີ 1 ແລະ ແຜນອາທິດທີ 3 ຕ້ອງສົ່ງໃນວັນສຸກຂອງອາທິດທີ 2 ແລະ ຕ້ອງໄດ້ປະຕິບັດຈົນໝົດຊຸດຝຶກຫັດ).
- ການຂຽນແຜນປະຈຳອາທິດໃຫ້ອີງໃສ່ຂໍ້ມູນຈາກແຜນວຽກຄູປະຈຳຫ້ອງກຸ່ມທີ່ໄດ້ວາງໄວ້.
- ການຂຽນແຜນປະຈຳອາທິດຕ້ອງໝູນວຽນກັນຂຽນພາຍໃນກຸ່ມ ໂດຍຖືເອົາຜູ້ຂຽນເປັນຫົວໜ້າກຸ່ມ ແລະ ເຊັນຢັ້ງຢືນ.

ຮ່າງທີ 05:

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສຶກສາທິການ ແລະ ກິລາ ແຂວງ..........................

ຫ້ອງການສຶກສາທິການ ແລະ ກິລາ ເມືອງ..........................

ໂຮງຮຽນ .........................................................

# ບົດລາຍງານ

ນະມັດສະການ/ຈະເລີນພອນ: ພຣະ/ທ່ານຄູປະຈຳຫ້ອງ ຫ້ອງ............

ເລື່ອງ: ລາຍງານການປະຕິບັດໜ້າທີ່ວຽກຄູປະຈຳຫ້ອງປະຈຳອາທິດ ອາທິດທີ..............

- ອີງຕາມ ແຜນການການເຄື່ອນໄຫວວຽກງານຝຶກຫັດ ສິກຮຽນ................................................
- ອີງຕາມ ແຜນການເຄື່ອນໄຫວວຽກງານປະຈຳອາທິດທີ.......................................................
- ອີງຕາມ ໜ້າວຽກຕົວຈິງທີ່ໄດ້ປະຕິບັດໃນໄລຍະ 1 ອາທິດຜ່ານມາ

- ຫ້ອງ:.......................
- ອາທິດທີ ...........ເລີ່ມແຕ່ວັນທີ....../....../...........ຫາ ວັນທີ....../......./...........
- ຊື່ ແລະ ນາມສະກຸນ ກຸ່ມນັກສຶກສາຄູຝຶກຫັດ:
  1. ……………………………………………………
  2. ……………………………………………………
  3. ……………………………………………………

## I. ສະພາບລວມຂອງຫ້ອງຮຽນ.

- ຈຸດພິເສດຂອງຫ້ອງ…………………………........................…...........................................

## II. ແຜນການປະຈຳອາທິດ.

- ວຽກສິດສອນ………………….............................................……….........................
- ວຽກຄູປະຈຳຫ້ອງ………….............................................……...……......................
- ວຽກຊຸມຊົນ……………….............................................………........……..............

## III. ແຜນການເຄື່ອນໄຫວນອກຫຼັກສູດ.

- ອອກແຮງງານ, ຂ່າວສານ, ປ້ອງກັນ .....................................................................

## IV. ເກັບກຳປະຫວັດນັກຮຽນ.

- ສະຖິຕິນັກຮຽນ…......................................................................................
- ຕິດຕາມໃກ້ຊິດຜູ້ປົກຄອງ (ເຈົ້າອະທິການວັດ) ສຳລັບນັກຮຽນມີບັນຫາ .....................................

## V. ການສ້າງແຜນປະຕິບັດ.

- ສ້າງຕາຕະລາງປະຕິບັດແຜນ ........................................................................
- ການຈັດຕັ້ງບຳລຸງນັກຮຽນທີ່ຮຽນອ່ອນ .........................................................................

## VI. ຜົນສຳເລັດຂອງການປະຕິບັດ.

- ( ອີງຕາມຜົນສຳເລັດຂອງວຽກງານຕາມແຜນທີ່ໄດ້ກຳນົດໄວ້ )
- ..........................................................................

## VII. ຈຸດດີ, ຈຸດອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້.

ກ. ຈຸດດີ: ..............................................................................................................

ຂ. ຈຸດອ່ອນ: .........................................................................................................

ຄ. ບົດຮຽນທີ່ຖອດຖອນໄດ້: ......................................................................................

## VIII. ຂໍ້ສະເໜີ:

..............................................................................................................................

ທີ່ ..........................................., ວັນທີ ....................................

**ຄູປະຈຳຫ້ອງເກົ່າ** **ຄູຝຶກຫັດ**

**ຮ່າງທີ 06:**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສຶກສາທິການ ແລະ ກິລາ ແຂວງ…....................
ຫ້ອງການສຶກສາທິການ ແລະ ກິລາ ເມືອງ..................….
ຂະບວນຝຶກຫັດ ............................................

**ໃບປະເມີນວຽກງານຄູປະຈຳຫ້ອງ**

ຊື່ ແລະ ນາມສະກຸນ (ກຸ່ມ.....): 1. ......................; 2. .....................; 3. .........................
ຫ້ອງ....................

| ລ/ດ | ເນື້ອໃນການປະເມີນ | ຜົນການປະເມີນ | | ຫຼັກຖານ |
|---|---|---|---|---|
| | | ຄັ້ງທີ 1 | ຄັ້ງທີ 2 | |
| 1 | ການສ້າງແຜນປະຈຳອາທິດ | | | ມີແຜນປະຈຳອາທິດຕິດໄວ້ຫ້ອງທຸກອາທິດ. |
| 2 | ການສ້າງລະບົບການຈັດຕັ້ງຫ້ອງ | | | ມີໂຄງຮ່າງການຈັດຕັ້ງຫ້ອງ |
| 3 | ແຜນການເຄື່ອນໄຫວນອກຫຼັກສູດ | | | ມີແຜນ, ມີຜົນການເຄື່ອນໄຫວຕົວຈິງທຸກອາທິດພາຍໃນ/ນອກຫ້ອງ |
| 4 | ການຈັດຕັ້ງບຳລຸງນັກຮຽນອ່ອນ | | | ມີຈຳນວນຄັ້ງທີ່ປະຕິບັດຕົວຈິງ |
| 5 | ຕິດຕາມໃກ້ຊິດຜູ້ປົກຄອງ (ເຈົ້າອະທິການວັດ) ສຳລັບນັກຮຽນມີບັນຫາ | | | ຈຳນວນຄັ້ງທີ່ປະຕິບັດຕົວຈິງ |
| 6 | ການລາຍງານຜົນການຮຽນ | | | ມີບົດລາຍງານ 1 ຄັ້ງ / ເດືອນ |
| 7 | ການລາຍງານການຂາດຮຽນ | | | ມີບົດລາຍງານ 4 ຄັ້ງ / ເດືອນ |
| 8 | ການສຳຫຼວດຫ້ອງ | | | ມີການສຳຫຼວດທຸກອາທິດ |
| 9 | ຂຽນສະອາດ, ຖືກຫຼັກໄວຍະກອນ, ຈັດວາງເປັນລະບົບຕໍ່ເນື່ອງ | | | ບົດລາຍງານສົ່ງຕາມກຳນົດເວລາ |
| | **ຄະແນນລວມ** | ຄະແນນລວມ ຄັ້ງທີ 1 | ຄະແນນລວມ ຄັ້ງທີ 2 | |
| ຄະແນນລວມ | | | ຄະແນນລວມຄັ້ງທີ 1 + ຄັ້ງທີ 2 | |
| ຄະແນນສະເລ່ຍ | | | ຄະແນນລວມມາຫານໃຫ້ 2 | |
| ຄິດເປັນສ່ວນຮ້ອຍ (15%) | | | ຄະແນນສະເລ່ຍເປັນເປີເຊັນ % | |

ທີ່..........................., ວັນທີ................20....
ຄູປະຈຳຫ້ອງເກົ່າ

# ວິທີຄິດໄລ່ຄະແນນ ວຽກຄູປະຈຳຫ້ອງ

❖ ເອົາຄະແນນສະເລ່ຍຄູນໃຫ້ 15% ແລ້ວມາຫານໃຫ້ຄະແນນເຕັມ 90 ຜົນອອກມາເປັນຄະແນນໂຕຈິງຂອງວຽກຄູປະຈຳຫ້ອງ.

$$\frac{\text{ຄະແນນສະເລ່ຍ } \mathbf{x\ 15\%}}{90} = \text{............. ຄະແນນໂຕຈິງ.}$$

<u>**ໝາຍເຫດ**</u>:

- ການປະເມີນວຽກງານປະຈູຈຳຫ້ອງມີ 9 ລາຍການ, ແຕ່ລະລາຍການໃຫ້ຄະແນນເຕັມ 10 ຄະແນນ = 90 ຄະແນນ (90X10 = 90).
- ຄູປະຈຳຫ້ອງເດີມເປັນຜູ້ປະເມີນ 1 ຄັ້ງໃນອາທິດທີ 6 ແລະ ຄັ້ງທີ 2 ໃນອາທິດທີ 9 ຂອງບັ້ນຝຶກຫັດ.
- ປະເມີນທຸກຄັ້ງຕ້ອງມີບົດລາຍງານ ແລະ ຜົນງານໂຕຈິງປະກອບເປັນຫຼັກຖານ.
- ຫຼັງຈາກປະເມີນ 2 ຄັ້ງແລ້ວສົ່ງຜົນປະເມີນໃຫ້ຜູ້ອຳນວຍການໂຮງຮຽນສາມັນສີງເຊັນ ແລະ ປະທັບຕາ.

# ຄ. ການປະເມີນວຽກງານຊຸມຊົນ (ໃຫ້ຄະແນນເປັນຂະບວນ 10%).

**<u>ຮ່າງທີ 07:</u>**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສຶກສາທິການ ແລະ ກິລາ ແຂວງ..........................

ຫ້ອງການສຶກສາທິການ ແລະ ກິລາ ເມືອງ.........................

ຂະບວນຝຶກຫັດ ........................................................

## ບົດລາຍງານ

**ນະມັດສະການ/ຈະເລີນພອນ:** ພຣະ/ທ່ານ...........................

**ເລື່ອງ:** ລາຍງານການປະຕິບັດວຽກງານຊຸມຊົນ

- ອີງຕາມ ແຜນການການເຄື່ອນໄຫວວຽກງານຝຶກຫັດວິຊາຊີບຄູ ຂອງວິທະຍາໄລຄູສົງອົງຕື້ ສົກຮຽນ...........
- ອີງຕາມ ແຜນການເຄື່ອນໄຫວວຽກງານຊຸມຊົນ..................................................................

1. **ສະພາບລວມຊຸມຊົນ:**

   - ……………………………………………………………………………………….

2. **ແຜນຈະປະຕິບັດວຽກພັດທະນາຂອງຊຸມຊົນ:**

   - ………………………………………………………………………………….

3. **ຜົນສຳເລັດຂອງການປະຕິບັດ:**

   ❖ ວຽກທີ່ປະຕິບັດໄດ້ມີຈັກວຽກ? ວຽກໃດແດ່? ຈັກຄັ້ງ? ມີຈັກຄົນ? ວັນທີເດືອນປີ?

   ………………………………………………………………………………

   ❖ ດ້ານດີ : ....................................................................................................................

   ❖ ດ້ານອ່ອນ :..................................................................................................................

4. **ບົດຮຽນທີ່ຖອດຖອນ:**

   ......................................................................................................................................

**ວັນທີ ………../………/………**

| **ຜູ້ອຳນວຍການ** | **ຄະນະພັດທະນາການສຶກສາຂັ້ນບ້ານ/ວັດ** | **ຫົວໜ້າຂະບວນ** |
|---|---|---|

**ຂໍ້ແນະນຳ:** ຫົວໜ້າຂະບວນສົມທົບກັບຜູ້ອຳນວຍການໂຮງຮຽນວາງແຜນພົວພັນແຜນການພັດທະນາຊຸມຊົນນຳຄະນະພັດທະນາການສຶກສາຂັ້ນບ້ານ.

- ການປະເມີນຈະໄດ້ປະຕິບັດ 1 ຄັ້ງພາຍໃນອາທິດທີ 12 ໂດຍຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຜູ້ອຳນວຍການເປັນຜູ້ປະເມີນ.

## ❖ ການປະຕິບັດຕົວຈິງ (ໃຫ້ຄະແນນເປັນຂະບວນ).

**ຄຳແນະນຳ:**

- ຜູ້ປະເມີນ: ນາຍບ້ານ/ເຈົ້າອະທິການວັດ ແລະ ຜູ້ອຳນວຍການໂຮງຮຽນສາມັນສຶງ.
- ການປະເມີນ: ຕ້ອງປະເມີນ 1 ຄັ້ງໃນອາທິດທີ 9.
- ການໃຫ້ຄະແນນ: ແຕ່ລະລາຍການສູງສຸດ 10 ຄະແນນ.
- ຄະແນນລວມ: ຊຸມຊົນແມ່ນເອົາຄະແນນ ຄະນະພັດທະນາການສຶກສາຂັ້ນບ້ານ/ວັດບວກກັບ ຄະແນນຈາກຜູ້ອຳນວຍການໂຮງຮຽນສາມັນສຶງແລ້ວຫານ 2.

**<u>ຮ່າງທີ 08:</u>**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສຶກສາທິການ ແລະ ກິລາ ແຂວງ..........................

ຫ້ອງການສຶກສາທິການ ແລະ ກິລາ ເມືອງ.........................

### ການປະເມີນວຽກງານຊຸມຊົນ

ຂະບວນຝຶກຫັດ: ............................................................

| ລ/ດ | ເນື້ອໃນປະເມີນ | ຄະແນນ | | ຫຼັກຖານ |
|---|---|---|---|---|
| | | ຄະນະພັດທະນາ ຂັ້ນບ້ານ/ວັດ | ຜູ້ອຳນວຍການ ໂຮງຮຽນສາມັນ | |
| 1 | ບົດລາຍງານຖືກຕ້ອງຕາມທີ່ກຳນົດ | | | ມີບົດລາຍງານ |
| 2 | ສ້າງແຜນພົບປະຄະນະພັດທານາການສຶກສາ ຂັ້ນບ້ານ/ວັດ. | | | ມີແຜນພົບປະຄະນະ ພັດທະນາບ້ານ/ວັດ. |
| 3 | ພົບປະຄະນະພັດທານາການສຶກສາຂັ້ນບ້ານ/ວັດ. | | | ໄດ້ມີການພົບປະ |
| 4 | ການສ້າງແຜນພັດທະນາ ແລະ ແບ່ງວຽກ | | | ມີແຜນພັດທະນາວຽກງານ |
| 5 | ການຈັດຕັ້ງ ແລະ ເຄື່ອນໄຫວ | | | ເລີ່ມປະຕິບັດຕົວຈິງວັນທີ |
| 6 | ຜົນສຳເລັດຕົວຈິງ | | | ຜົນງານຕົວຈິງ |
| 7 | ປະຊຸມຖອດຖອນບົດຮຽນກັບຄະນະພັດທານາການ ສຶກສາຂັ້ນບ້ານ/ວັດ. | | | ມີການປະຊຸມວັນທີ |
| | ລວມຄະແນນ | ຄະແນນລວມ ຄັ້ງທີ 1 | ຄະແນນລວມ ຄັ້ງທີ 2 | |
| ຄະແນນລວມ | | ຄະແນນລວມຄັ້ງທີ 1 + ຄັ້ງທີ 2 | | |
| ຄະແນນສະເລ່ຍ | | ຄະແນນລວມມາຫານໃຫ້ 2 | | |
| ຄິດເປັນສ່ວນຮ້ອຍ (10%) | | ຄະແນນສະເລ່ຍເປັນເປີເຊັນ % | | |

ທີ່ .............................. ທີ່ ...................................

ວັນທີ .....................20... ວັນທີ ...............................20....

ຜູ້ອຳນວຍການໂຮງຮຽນ: ........................ ຄະນະພັດທະນາການສຶກສາຂັ້ນບ້ານ/ວັດ

# ວິທີຄິດໄລ່ຄະແນນວຽກງານຊຸມຊົນ

❖ ເອົາຄະແນນສະເລ່ຍຄູນໃຫ້ 10% ແລ້ວມາຫານ 70.

$$\frac{\text{ຄະແນນສະເລ່ຍ X } 10\%}{70} = \cdots \text{ຄະແນນໂຕຈິງ.}$$

**<u>ໝາຍເຫດ</u>:**

- ການປະເມີນວຽກຊຸມຊົນ ມີ 7 ລາຍການ, ແຕ່ລະລາຍການໃຫ້ຄະແນນເຕັມ 10.
- ຄະນະພັດທະນາການສຶກສາຂັ້ນບ້ານ ຫຼື ເຈົ້າອະທິການວັດ ແລະ ຜູ້ອໍານວຍການໂຮງຮຽນສາມັນສິງບ່ອນລົງຝຶກຫັດເປັນ ຜູ້ປະເມີນວຽກຊຸມຊົນ ໃນອາທິດທີ 9 ຂອງບັ້ນຝຶກຫັດ.
- ການປະເມີນຂອງແຕ່ລະພາກສ່ວນໃຫ້ອີງຕາມບົດລາຍງານ ແລະ ຜົນງານໂຕຈິງຂອງນັກສຶກສາຄູຝຶກຫັດຕະຫຼອດໄລຍະຂອງບັ້ນຝຶກຫັດປະກອບເປັນຫຼັກຖານ.
- ຫຼັງຈາກປະເມີນຜົນແລ້ວໃຫ້ແຕ່ລະພາກສ່ວນເຊັນ ແລະ ປະທັບຕາເພື່ອເປັນຫຼັກຖານ.

## ໗. ການປະເມີນໃບເກັບກ່ຽວຜົນງານ (ໃຫ້ຄະແນນເປັນກຸ່ມ 15%).

### ໂຄງຮ່າງເນື້ອໃນການຂຽນບົດລາຍງານ ຜົນເກັບກ່ຽວຜົນງານ ວຽກງານຝຶກຫັດວິຊາຊີບຄູ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສິງອິງຕື້ ເລກທີ........... /ວຄສ.ອຕ.ພກ

ນະຄອນຫຼວງວຽງຈັນ, ວັນທີ ..............................

### ຂໍ້ແນະນຳວ່າດ້ວຍການຂຽນບົດລາຍງານ ຜົນເກັບກ່ຽວຜົນງານ ວຽກງານຝຶກຫັດວິຊາຊີບຄູ ຂອງວິທະຍາໄລຄູສິງອິງຕື້

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງວິທະຍາໄລຄູສິງອິງຕື້ ສະບັບເລກທີ ....../ສສກ.ຈຕ, ລົງວັນທີ ..................;
- ອີງຕາມ ແຜນປະຕິບັດການຮຽນ-ການສອນຂອງວິທະຍາໄລຄູສິງອິງຕື້.

ວິທະຍາໄລຄູສິງອິງຕື້ ຈຶ່ງໄດ້ອອກຂໍ້ກຳນົດແນະນຳໃນການຂຽນບົດລາຍງານຜົນເກັບກ່ຽວຜົນງານ ວຽກງານຝຶກຫັດວິຊາຊີບຄູ ເພື່ອເປັນບ່ອນອີງໃນການໃຫ້ຄະແນນ ວຽກງານວິໄຈໃນຫ້ອງຮຽນ ຄິດເປັນ 15% ຂອງວຽກງານຝຶກຫັດວິຊາຊີບຄູ ແລະ ຄວາມເປັນເອກະພາບ ທາງດ້ານເນື້ອໃນ ແລະ ຮູບແບບ; ດັ່ງນັ້ນ, ຈຶ່ງໄດ້ອອກຂໍ້ແນະນຳສະບັບນີ້ຂຶ້ນມາ, ລາຍລະອຽດດັ່ງລຸ່ມນີ້:

❖ **ຮູບແບບທົ່ວໄປ:**

1. ການຕີພິມໃຊ້ໂປຼແກຣມ Microsoft Word 2010 ພາສາລາວ (Phetsarath OT) ແລະ ພາສາອັງກິດ (New Time Roman).

**<u>ໝາຍເຫດ:</u>** (ຫົວຂໍ້ໃຫຍ່ 14 B, ຫົວຂໍ້ນ້ອຍ 12 B, ເນື້ອໃນ 12).

2. ຂະໜາດໜ້າເຈ້ຍ: ເບື້ອງເທິງ 2 ຊມ, ເບື້ອງລຸ່ມ 2 ຊມ, ເບື້ອງຂວາ 2 ຊມ ແລະ ເບື້ອງຊ້າຍ 3 ຊມ.
3. ຂະໜາດໜ້າເຈ້ຍ: A4 (21 x 29,5).
4. ປຶ້ມເຫຼັ້ມໜຶ່ງບໍ່ໃຫ້ຫຼຸດ 15 ໜ້າຂຶ້ນໄປ (ບໍ່ນັບຮູບພາບ, ເອກະສານອ້າງອີງ ແລະ ອື່ນໆຖ້າມີ).
5. ເຂົ້າເຫຼັ້ມເປັນປົກແຂງ.
6. ກາໝາຍ (Logo) ຂອງວິທະຍາໄລຄູສິງອິງຕື້ 4 x 6 ຊມ ແລະ ໃຊ້ໜ້າປົກສີເຫຼືອງອ່ອນ.

## ໂຄງຮ່າງເນື້ອໃນການຂຽນບົດລາຍງານ ຜົນເກັບກ່ຽວຜົນງານ ວຽກງານຝຶກຫັດວິຊາຊີບຄູ ຂອງວິທະຍາໄລຄູສິງອິງຕົ້

## ພາກສ່ວນຕົ້ນ

1. ປົກນອກ
2. ສາລະບານ
3. ພາກສ່ວນເນື້ອໃນການຂຽນບົດລາຍງານ ຜົນເກັບກ່ຽວຜົນງານ

**<u>ຮ່າງທີ 09:</u>**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສຶກສາທິການ ແລະ ກິລາ ແຂວງ..............................

ຫ້ອງການສຶກສາທິການ ແລະ ກິລາ ເມືອງ..............................

ໂຮງຮຽນ ..............................................................

## ບົດລາຍງານ

## ການເກັບກ່ຽວຜົນງານ ວຽກງານຝຶກຫັດວິຊາຊີບຄູ

ຊື່ ແລະ ນາມສະກຸນ (ເປັນກຸ່ມ): 1...........................; 2.............................; 3............................

ຂະບວນຝຶກຫັດ .................................................. ,ສົກຮຽນ ..............................................

**I. ບ່ອນອີງ:**

- ອີງຕາມ ແຜນການຮຽນ-ການສອນຂອງ ວິທະຍາໄລຄູສິງອິງຕົ້ ປະຈຳສົກຮຽນ 20...-20...
- ອີງຕາມ ແຜນການເຄື່ອນໄຫວ ວຽກງານຝຶກຫັດວິຊາຊີບຄູຂອງ ວິທະຍາໄລຄູສິງອິງຕົ້ ສົກຮຽນ 20...– 20...

**II. ສະພາບລວມຂອງໂຮງຮຽນ:**

ກ. ປະຫວັດ ແລະ ຄວາມເປັນມາຂອງໂຮງຮຽນ: ..........................................................

ຂ. ສະພາບ ແລະ ຈຸດພິເສດ..................................................................................

ຄ. ຂໍ້ສະດວກ...........................................................................................

ງ. ຂໍ້ຫຍຸ້ງຍາກ..........................................................................................

**III. ໜ້າວຽກຫຼັກ:**

**1. ວຽກງານສິດສອນ.** ( ການສ້າງແຜນການສອນ, ແຕ່ງບົດສອນ, ສື່ການສອນ, ຮ່ວມໂມງສອນ, ຖອດຖອນບົດຮຽນ, ຂຽນບົດລາຍງານ.........) ກິດຈະກຳສົ່ງເສີມການຮຽນ-ການສອນເຊັ່ນ: ງານຖາມ-ຕອບວິທະຍາສາດ.

ກ. ດ້ານດີ

ຂ. ດ້ານອ່ອນ

**2. ວຽກຄູປະຈຳຫ້ອງ.**

- ລະບົບການຈັດຕັ້ງຫ້ອງ, ແຜນການເຄື່ອນໄຫວວຽກຄູປະຈຳຫ້ອງ, ແຜນກິດຈະກຳປະຈຳອາທິດ, ບົດສະຫຼຸບປະຈຳອາທິດ, ບັນທຶກປະຈຳວັນ, ຕິດຕາມບັນທຶກຜົນການຮຽນ, ສຶກສາປະຫວັດນັກຮຽນ ແລະ ສຳຫຼວດຫ້ອງ.

ກ. ດ້ານດີ

ຂ. ດ້ານອ່ອນ

**3. ວຽກຊຸມຊົນ.**

ການສ້າງແຜນ ແລະ ການເຄື່ອນໄຫວ (ລະບຸວັນເວລາລະອຽດ).

**4. ວຽກວິໄຈໃນຫ້ອງຮຽນ.**

(ການເກັບກຳຂໍ້ມູນ ແລະ ການຂຽນຕາມໄລຍະ) .....................

**IV. ສາເຫດທີ່ພາໃຫ້ມີຈຸດດີ, ຈຸດອ່ອນ ແລະ ບົດຮຽນທີຖອດຖອນໄດ້.**

ກ. ສາເຫດທີ່ພາໃຫ້ມີຈຸດດີ.

ຂ. ສາເຫດທີ່ພາໃຫ້ມີຈຸດອ່ອນ.

ຄ. ບົດຮຽນທີ່ຖອດຖອນໄດ້.

**V. ຂໍ້ສະເໜີແນະ:**

1. ສະເໜີຕໍ່ການຈັດຕັ້ງ:
   - ❖ ໂຮງຮຽນບ່ອນລົງຝຶກຫັດ: ...............................................................................
   - ❖ ວິທະຍາໄລຄູສີງອີງຕື້: ...............................................................................
   - ❖ ສະເໜີຕໍ່ນັກສຶກສາຄູຝຶກຫັດລຸ້ນຕໍ່ໄປ: ....................................................................

ທີ່ ......................................., ວັນທີ................. 20.....

ອາຈານນຳພາຝຶກຫັດ ວຄສ ຜູ້ອຳນວຍການໂຮງຮຽນສາມັນ ຫົວໜ້າຂະບວນ

## 4. ພາກສ່ວນທ້າຍ ຫຼື ເອກະສານອ້າງອີງ

- ບົດສອນຫຼັກ, ບົດສອນສຳຮອງ, ບົດສອນທີ່ໄດ້ຂຶ້ນຫ້ອງສອນ ແລະ ບົດສອນທີ່ຊ່ວຍສອນ.
- ສື່ການສອນຕ່າງໆ ທີ່ກ່ຽວຂ້ອງກັບບົດວິໄຈ.
- ຮູບພາບການສອນ ແລະ ຮູບພາບການເຄື່ອນໄຫວກິດຈະກຳຕ່າງໆຂອງກຸ່ມໃນໄລຍະລົງຝຶກຫັດ.

## 5. ເອກະສານອ້າງອີງ.

- ເອກະສານຕ່າງໆ (ຖ້າມີ).

## 6. ຊີວະປະຫວັດຫຍໍ້ຂອງກຸ່ມຜູ້ຂຽນ.

**<u>ຮ່າງທີ 10:</u>**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສົງອົງຕື້ ເລກທີ /ວຄສ.ອຕ.ພກ

ນະຄອນຫຼວງວຽງຈັນ, ວັນທີ................ 20....

## ການປະເມີນບົດລາຍງານ ຜົນເກັບກ່ຽວຜົນງານ

| ລ/ດ | **ມາດຖານການປະເມີນ** | ຄະແນນ |
|---|---|---|
| 1 | ຂຽນຖືກຕ້ອງຕາມໂຄງຮ່າງທີ່ກຳນົດໄວ້ | 40 % |
| 2 | ເນື້ອໃນສອດຄ່ອງຖືກຕ້ອງຕາມຄວາມເປັນຈິງ | 20 % |
| 3 | ຂຽນຖືກຕ້ອງຕາມຫຼັກໄວຍາກອນ | 20 % |
| 4 | ເອກະສານອ້າງອີງທີ່ກ່ຽວຂ້ອງ (ບົດສອນ, ເອກະສານ, ຮູບພາບ ແລະ ອື່ນໆ) | 10 % |
| 5 | ເອກະສານລາຍງານເຮັດເປັນເຫຼັ້ມມາດຕະຖານສົມບູນ | 10 % |
| | **ຄະແນນລວມ** | **100 %** |

ຄິດເປັນສ່ວນຮ້ອຍ = ຄະແນນສະເລ່ຍ X 0.15

**ຮ່າງທີ 11:**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ
ວິທະຍາໄລຄູ ສົງອົງຕື້ ເລກທີ /ວຄສ.ອຕ.ພກ
ນະຄອນຫຼວງວຽງຈັນ, ວັນທີ ......................20....

## ໃບປະເມີນບົດລາຍງານ ຜົນເກັບກ່ຽວຜົນງານ

**- ຊື່ ແລະ ນາມສະກຸນ (ກຸ່ມທີ່ .....):**

1. ..................................................., ສາຍຮຽນ: ...........................................
2. ..................................................., ສາຍຮຽນ: ...........................................
3. ..................................................., ສາຍຮຽນ: ...........................................

- ຂະບວນຝຶກຫັດ: ...........................................................................................
- ວັນ, ເດືອນ, ປີ ລົງຝຶກຫັດ: ເລີ່ມ......... ເຖິງ .........., ໃຊ້ເວລາ:......ອາທິດ, ສົກຮຽນ: .......................

| ລ/ດ | ມາດຖານການປະເມີນ | ຄະແນນ |
|---|---|---|
| 1 | ຂຽນຖືກຕ້ອງຕາມໂຄງຮ່າງທີ່ກຳນົດໄວ້ | |
| 2 | ການຂຽນມີເນື້ອໃນດີສອດຄ່ອງຖືກຕ້ອງຕາມຄວາມເປັນຈິງ | |
| 3 | ຂຽນຖືກຕ້ອງຕາມຫຼັກໄວຍາກອນ | |
| 4 | ເອກະສານອ້າງອີງທີ່ກ່ຽວຂ້ອງ (ບົດສອນ, ເອກະສານ, ຮູບພາບ ແລະ ອື່ນໆ) | |
| 5 | ເອກະສານລາຍງານເຮັດເປັນເຫຼັ້ມມາດຕະຖານສົມບູນ | |
| | **ຄະແນນລວມ** | |

ນະຄອນຫຼວງວຽງຈັນ, ວັນທີ ....................... 20...
**ຄະນະປະເມີນ**

## ວິທີຄິດໄລ່ຄະແນນ ບົດລາຍງານ ຜົນເກັບກ່ຽວຜົນງານ

❖ ເອົາຄະແນນສະເລ່ຍຄູນໃຫ້ 0.15 ຜົນອອກມາເປັນຄະແນນໂຕຈິງ

**ຕົວຢ່າງ:** ພຣະ ຂ ໄດ້ຄະນແນນ 90

ວິທີຄິດໄລ່ 90 x 0.15= 13.5 (ຄະແນນຕົວຈິງ)

# IV. ການປະເມີນວຽກງານຝຶກຫັດວິຊາຊີບຄູ.

❖ ຄຳແນະນຳໃນການປະເມີນວຽກງານຝຶກຫັດວິຊາຊີບຄູ.
ການປະເມີນມີ 4 ໜ້າວຽກດັ່ງນີ້:

| ລ/ດ | ເນື້ອໃນປະເມີນ | ເກນການປະເມີນ |
|---|---|---|
| 1 | ວຽກສິດສອນ | 60% |
| 2 | ວຽກຄູປະຈຳຫ້ອງ | 15% |
| 3 | ວຽກຊຸມຊົນ | 10% |
| 4 | ວຽກວິໄຈໃນຫ້ອງຮຽນ | 15% |
| ລວມ | | **100%** |

## 1. ມາດຖານການໃຫ້ຄະ ແນນ

| ຄະແນນ | ຄວາມໝາຍ |
|---|---|
| 10 | ດີເລີດ |
| 9 | ດີຫຼາຍ |
| 7-8 | ດີ |
| 5-6 | ປານກາງ |
| 3-4 | ອ່ອນ |
| 1-2 | ໃຊ້ການບໍ່ໄດ້ |

## 2. ເກນໃຫ້ຄະແນນໝົດຊຸດຝຶກຫັດວິຊາຊີບຄູ (ວິທະຍາໄລຄູສິງອິງຕື້ເປັນຜູ້ສະຫຼຸບ).

| ເກນຄະແນນ | ເກຣດ | ລະດັບຄະແນນ | ຄວາມໝາຍ |
|---|---|---|---|
| 90% - 100% | A | 4 | ດີເລີດ |
| 85% - 89% | $B^{+}$ | 3.5 | ດີຫຼາຍ |
| 75% - 84% | B | 3 | ດີ |
| 70% - 74% | $C^{+}$ | 2.5 | ໃຊ້ |
| 60% - 69% | C | 2 | ຜ່ານ |
| 55% - 59% | $D^{+}$ | 1.5 | ບໍ່ຜ່ານ |
| 45% - 54% | D | 1 | ບໍ່ຜ່ານ |
| 0% - 44% | F | 0 | ຕົກ |

**ຮ່າງທີ 12:**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ
ວິທະຍາໄລຄູສົງອົງຕື້ ເລກທີ /ວຄສ.ອຕ.ພກ
ນະຄອນຫຼວງວຽງຈັນ, ວັນທີ ............20...

## ສັງລວມຄະແນນໝົດຊຸດຝຶກຫັດ

| ລ/ດ | ຊື່ ແລະ ນາມສະກຸນ | ວຽກສິດສອນ 60% | ວຽກ ຄູປະຈຳຫ້ອງ 15% | ວຽກ ພັດທະນາຊຸມຊົນ 10% | ວຽກວິໄຈ - ສຳມະນາ 15% |
|---|---|---|---|---|---|
| 1 | ພຣະ ....................... | | | | |
| 2 | ພຣະ ....................... | | | | |
| 3 | ສ.ນ ....................... | | | | |
| 4 | ສ.ນ ....................... | | | | |
| **ລວມທັງໝົດ** | | | | | |
| **Grade** | | | | | |
| **ຄະແນນ** | | | | | |

ນະຄອນຫຼວງວຽງຈັນ, ວັນທີ ....................... 20...
**ຜູ້ອຳນວຍການ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບວັດ ທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສົງອົງຕື້ ເລກທີ /ວຄສ.ອຕ.ພກ

ນະຄອນຫຼວງວຽງຈັນ, ວັນທີ 20...

# ກົດລະບຽບ

# ການລົງຝຶກຫັດຂອງວິຊາຊີບຄູຂອງນັກສຶກສາຄູຝຶກຫັດ

- ເພື່ອເຮັດໃຫ້ການລົງຝຶກຫັດວິຊາຊີບຄູປະສົບຜົນເປັນຈິງ, ເປັນບ່ອນອີງໃນການໃຫ້ຄະແນນຝຶກຫັດ ແລະ ຄຸນສົມບັດ.
- ເພື່ອເປັນບ່ອນອີງ ແລະ ສ້າງຄວາມສະດວກໃນການຄຸ້ມຄອງດູແລນັກສຶກສາຄູຝຶກຫັດ ຂອງຄະນະຮັບຜິດຊອບວຽກງານຝຶກຫັດວິຊາຊີບຄູ ພາກສ່ວນຕ່າງໆ, ອຳນາດການປົກຄອງບ້ານ ແລະ ວັດ.
- ເພື່ອໃຫ້ນັກສຶກສາຄູຝຶກຫັດດຳລົງຊີວິດຢູ່ໃນຄວາມເປັນລະບຽບ ແລະ ເຄື່ອນໄຫວໄປມາຢ່າງມີແບບແຜນຖືກຕ້ອງຕາມພຣະທັມວິໄນ, ລະບຽບກົດໝາຍບ້ານ-ເມືອງ, ວັດທະນະທຳ, ຮີດຄອງປະເພນີ ແລະ ກົດລະບຽບຕ່າງໆ ຂອງທ້ອງຖິ່ນ.

ດັ່ງນັ້ນ, ຜູ້ອຳນວຍການວິທະຍາໄລຄູສົງອົງຕື້ ຈຶ່ງໄດ້ວາງກົດລະບຽບສະບັບນີ້ ເຊິ່ງມີເນື້ອໃນລະອຽດດັ່ງນີ້:

## ໝວດທີ I

## ວ່າດ້ວຍກົດລະບຽບທົ່ວໄປຂອງນັກສຶກສາຄູຝຶກຫັດ

**ມາດຕາ 1:** ນັກສຶກສາຄູຝຶກຫັດທຸກອົງຕ້ອງປະຕິບັດຕາມກົດລະບຽບ , ກົດໝາຍບ້ານເມືອງຢ່າງເຂັ້ມງວດ , ເຄົາລົບນັບຖືຮີດຄອງປະເພນີອັນດີງາມຂອງຊາດ ແລະ ທ້ອງຖິ່ນ.

**ມາດຕາ 2:** ນັກສຶກສາຄູຝຶກຫັດກ່ອນຈະໄປ ຫຼື ມາຕ້ອງຄອບລາຄະນະຮັບຜິດຊອບວຽກງານຝຶກຫັດ , ຜູ້ອຳນວຍການໂຮງຮຽນ ແລະ ເຈົ້າອະທິການວັດທີ່ຕົນເອງພັກເຊົາຢູ່.

**ມາດຕາ 3:** ນັກສຶກສາຄູຝຶກຫັດທຸກອົງຕ້ອງນຸ່ງຖືສຸພາບຖືກຕາມລະບຽບທີ່ວິທະຍາໄລຄູສົງອົງຕື້ວາງອອກ ແລະ ຖືກຕ້ອງຕາມຫຼັກພຣະທັມວິໄນ ຮີດຄອງຂອງຄະນະສົງລາວ, ພ້ອມທັງຕິດບັດນັກສຶກສາທຸກຄັ້ງໃນເວລາເຄື່ອນໄຫວວຽກງານຝຶກຫັດ.

**ມາດຕາ 4**: ນັກສຶກສາຄູຝຶກຫັດທຸກອົງຕ້ອງໃຊ້ວາຈາສຸພາບ, ອ່ອນໂຍນມີມາລະຍາດ ແລະ ມີມະນຸດສຳພັນທີ່ດີໃນໂຮງຮຽນ, ວັດ ແລະ ໃນສັງຄົມ.

**ມາດຕາ 5:** ນັກສຶກສາຄູຝຶກຫັດທຸກອົງຕ້ອງເຂົ້າຮ່ວມການເຄື່ອນໄຫວກິດຈະກຳວຽກງານຕ່າງໆທີ່ກ່ຽວກັບວຽກງານ

ຝຶກຫັດທີ່ທາງໂຮງຮຽນ, ວັດ, ອໍານາດການປົກຄອງບ້ານ ແລະ ອົງການ ອ.ພ.ສ ຈັດຕັ້ງຂຶ້ນດ້ວຍຄວາມຮັບຜິດຊອບສູງ.

**ມາດຕາ 6:** ນັກສຶກສາຄູຝຶກຫັດ ຕ້ອງແຕ່ງບົດສອນ ແລະ ຜ່ານບົດສອນນໍາຄູອາຈານປະຈໍາວິຊາ/ອາຈານວິຊາສະເພາະ ຢ່າງຊ້າ 24 ຊົ່ວໂມງ ກ່ອນຂຶ້ນຫ້ອງສອນ ພ້ອມທັງຝຶກທັກສະ ແລະ ກຽມອຸປະກອນ/ສື່ການສອນໃຫ້ຄົບຖ້ວນ.

**ມາດຕາ 7:** ນັກສຶກສາຄູຝຶກຫັດທຸກອົງຕ້ອງມີຄວາມຊື່ສັດສຸດຈະລິດຕໍ່ຕົນເອງ, ຕໍ່ໝູ່ຄູ່, ຕໍ່ຄູອາຈານ, ຕໍ່ເຈົ້າອະທິການວັດທີ່ຕົນເອງພັກອາໄສຢູ່, ຕໍ່ການຈັດຕັ້ງ ແລະ ມີຄວາມສາມັກຄີກ້ວາງຂວາງ.

**ມາດຕາ 8:** ນັກສຶກສາຄູຝຶກຫັດທຸກອົງຕ້ອງເຂົ້າຮ່ວມວຽກງານຝຶກຫັດທັນເວລາ ແລະ ເປັນປົກກະຕິຕາມອັນເວລາທີ່ໄດ້ກໍານົດໄວ້.

**ມາດຕາ 9:** ຫ້າມນັກສຶກສາຄູຝຶກຫັດພົວພັນເພດກົງກັນຂ້າມທີ່ຜິດຕໍ່ຮີດຄອງປະເພນີ ແລະ ລະບຽບກົດໝາຍບ້ານເມືອງ.

**ມາດຕາ 10:** ຫ້າມນັກສຶກສາຄູຝຶກຫັດ ຊື້ -ຂາຍ, ເສບ ແລະ ມີສິ່ງເສບຕິດໄວ້ໃນຄອບຄອງ.

**ມາດຕາ 11:** ຫ້າມນັກສຶກສາຄູຝຶກຫັດປະພຶດຕົນບໍ່ຖືກຕ້ອງເຊັ່ນ: ການໃຊ້ທ່າທີແບບນັກເລງອັນທະພານ, ສ້າງຄວາມບໍ່ສະຫງົບຢູ່ພາຍໃນວັດ, ໃນໂຮງຮຽນ, ໃນຊຸມຊົນ, ໃນສັງຄົມ ແລະໃນຂະບວນຝຶກຫັດ.

**ມາດຕາ 12:** ຫ້າມນັກສຶກສາຄູຝຶກຫັດທໍາລາຍສະພາບແວດລ້ອມ, ວັດຖຸສິ່ງຂອງສ່ວນລວມເຊັ່ນ: ປ້າຍໂຄສະນາ, ປ້າຍປະກາດ ແລະ ອື່ນໆ.

**ມາດຕາ 13:** ຫ້າມນັກສຶກສາຄູຝຶກຫັດມີອາວຸດສົງຄາມ ແລະ ວັດຖຸອັນຕະລາຍໄວ້ໃນຄອບຄອງ.

**ມາດຕາ 14:** ຫ້າມນັກສຶກສາຄູຝຶກຫັດຖຽງກັນກັບໝູ່ຄູ່, ຄູ-ອາຈານ, ນັກຮຽນ ແລະ ສັງຄົມ.

**ມາດຕາ 15:** ຫ້າມນັກສຶກສາຄູຝຶກຫັດຫຼິ້ນການພະນັນທຸກປະເພດ.

## ໝວດທີ II
## ວ່າດ້ວຍຫຼັກການ ການໃຫ້ຄະແນນ ແລະ ການຕັດຄະແນນ

**ມາດຕາ 16:** ຕະຫຼອດໄລຍະ 10 ອາທິດ ນັກຮຽນຄູຝຶກຫັດແຕ່ລະອົງຈະໄດ້ຮັບຄະແນນກິລິຍາມາລະຍາດ, ການປະພຶດ ແລະ ການເຄື່ອນໄຫວຕ່າງໆ ລວມ 250 ຄະແນນ ຖ້ານັກສຶກສາຄູຝຶກຫັດກະທໍາຜິດຈະຖືກຕັດຄະແນນຕາມລາຍລະອຽດລຸ່ມນີ້:

**ຕາຕະລາງການຕັດຄະແນນ**

| ລ/ດ | ລາຍການຕັດຄະແນນ | ຄະແນນຕັດ | ຫົວໜ່ວຍ |
|---|---|---|---|
| 1 | ຜິດກົດລະບຽບ ແລະ ກົດໝາຍບ້ານເມືອງ | 250 | ຄະແນນ |
| 2 | ພົວພັນຄັງຄົມຊູ້ສາວທີ່ຜິດຮີດຄອງປະເພນີ | 250 | ຄະແນນ |
| 3 | ພົວພັນສິ່ງເສບຕິດທຸກປະເພດ | 250 | ຄະແນນ |
| 4 | ມີອາວຸດສົງຄາມ ແລະ ວັດຖຸອັນຕະລາຍໄວ້ໃນຄອບຄອງ | 250 | ຄະແນນ |
| 5 | ໃຊ້ອາຈາຫຍາບຊ້າຕໍ່ຄົນອື່ນ | 100 | ຄະແນນ |
| 6 | ຫຼິ້ນການພະນັນທຸກປະເພດ | 100 | ຄະແນນ |
| 7 | ຜິດຖຽງກັນກັບຄົນອື່ນ | 100 | ຄະແນນ |
| 8 | ກໍ່ຄວາມບໍ່ສະຫງົບໃນທຸກກໍລະນີ | 100 | ຄະແນນ |
| 9 | ເວົ້າຂວັນນິນທາ, ໃສ່ຮ້າຍປ້າຍສີ ແລະ ໝິ່ນປະໝາດເຮັດໃຫ້ຄົນອື່ນໄດ້ຮັບຄວາມເສື່ອມເສຍ | 100 | ຄະແນນ |

| | | | |
|---|---|---|---|
| 10 | ລັກເຄື່ອງທີ່ມີມູນຄ່າ 5.000 ກີບຂຶ້ນໄປ | 50 | ຄະແນນ |
| 11 | ທຳລາຍສະພາບແວດລ້ອມ ແລະ ວັດຖຸສິ່ງຂອງສ່ວນລວມ | 50 | ຄະແນນ |
| 12 | ຂາດການປະກອບສ່ວນວຽກງານຕ່າງໆ 1 ຄັ້ງ | 50 | ຄະແນນ |
| 13 | ວຽກທີ່ໄດ້ຮັບມອບໝາຍບໍ່ສຳເລັດ | 25 | ຄະແນນ |
| 14 | ບໍ່ຜ່ານແຜນການຕ່າງໆ 1 ຄັ້ງ | 25 | ຄະແນນ |
| 15 | ບໍ່ຜ່ານປົດສອນແລ້ວຂຶ້ນຫ້ອງສອນ | 25 | ຄະແນນ |
| 16 | ຂາດສອນໂດຍບໍ່ມີເຫດຜົນ 1 ຄັ້ງ | 25 | ຄະແນນ |
| 17 | ຂາດລວມ 1 ຄັ້ງ | 25 | ຄະແນນ |
| 18 | ແຕ່ງກາຍບໍ່ສຸພາບ | 25 | ຄະແນນ |
| 19 | ໄປບໍ່ລາມາບໍ່ຄອບ 1 ຄັ້ງ | 25 | ຄະແນນ |

**ມາດຕາ 17:** ຜູ້ທີ່ຖືກຕັດຄະແນນຈະຖືກປະຕິບັດວິໄນຕາມແຕ່ລະກໍລະນີລຸ່ມນີ້:

- ຖືກຕັດ 25-50 ຄະແນນ ຈະຖືກກ່າວເຕືອນຈາກຄະນະຮັບຜິດຊອບວຽກງານຝຶກຫັດ.
- ຖືກຕັດ 75-100 ຄະແນນ ຈະຖືກກ່າວເຕືອນຈາກຄະນະອຳນວຍການໂຮງຮຽນ (ພ້ອມທັງຂຽນໃບສາຫຼວດ).
- ຖືກຕັດ 125-150 ຄະແນນ ຈະຖືກກ່າວເຕືອນຈາກຄະນະຕິດຕາມ ແລະ ປະເມີນຜົນ (ພ້ອມທັງຂຽນໃບສາຫຼວດ).
- ຖືກຕັດ 175-250 ຄະແນນ ຈະຖືກສົ່ງກັບຄືນວິທະຍາໄລຄູສິງອິງຕື້.

**ມາດຕາ 18:** ການໃຫ້ຄະແນນຄຸນສົມບັດໃນໄລຍະຝຶກຫັດຈະອີງໃສ່ເກນ ແລະ ລະດັບຄະແນນດັ່ງນີ້:

❖ **ເກນ ແລະ ລະດັບຄະແນນຄຸນສົມບັດ:**

- ຖ້າຄະແນນຖືກຕັດ 0-25 ຄະແນນທຽບໃສ່ລະດັບ 9
- ຖ້າຄະແນນຖືກຕັດ 50 ຄະແນນທຽບໃສ່ລະດັບ 8
- ຖ້າຄະແນນຖືກຕັດ 75 ຄະແນນທຽບໃສ່ລະດັບ 7
- ຖ້າຄະແນນຖືກຕັດ 100 ຄະແນນທຽບໃສ່ລະດັບ 6
- ຖ້າຄະແນນຖືກຕັດ 125 ຄະແນນທຽບໃສ່ລະດັບ 5
- ຖ້າຄະແນນຖືກຕັດ 150 ຄະແນນທຽບໃສ່ລະດັບ 4
- ຖ້າຄະແນນຖືກຕັດ 175 ຄະແນນທຽບໃສ່ລະດັບ 3
- ຖ້າຄະແນນຖືກຕັດ 200 ຄະແນນທຽບໃສ່ລະດັບ 2
- ຖ້າຄະແນນຖືກຕັດ 225-250 ຄະແນນທຽບໃສ່ລະດັບ 1

➢ **ໝາຍເຫດ:** ນັກຮຽນຄູຝຶກຫັດຄະແນນຫຼຸດ 2,00 ຈະບໍ່ມີສິດຜ່ານຂັ້ນຝຶກຫັດວິຊາຊີບຄູ ເງື່ອນໄຂຄັດເລືອກບຸກຄົນດີເດັ່ນຮອບດ້ານ ແລະ ເດັ່ນສິດສອນໃນໄລຍະຝຶກຫັດ.

**1. ຄະແນນສິດສອນ.**

- ປະເພດ 1 ໄດ້ຄະແນນແຕ່ 55%-60%
- ປະເພດ 2 ໄດ້ຄະແນນແຕ່ 50%-54%

**2. ຄະແນນວຽກຄູປະຈຳຫ້ອງ.**

- ປະເພດ 1 ໄດ້ຄະແນນແຕ່ 13%-15%
- ປະເພດ 2 ໄດ້ຄະແນນແຕ່ 10%-12%

**3. ດ້ານຄຸນສົມບັດ (ອີງໃສ່ເກນຄະແນນ).**

- ເປັນບຸກຄົນທີ່ຫ້າວຫັນ ແລະ ບໍ່ຜິດລະບຽບຂອງນັກສຶກສາຄູຝຶກຫັດ.

- ເປັນແບບຢ່າງທີ່ດີ, ເປັນທີ່ຍອມຮັບຂອງເພື່ອນຮ່ວມງານ, ການຈັດຕັ້ງພື້ນຖານ ແລະ ນັກຮຽນ.

**4. ວຽກຊຸມຊົນ.**

- ເຂົ້າຮ່ວມກິດຈະກໍາຂອງການພັດທະນາຊຸມຊົນທຸກຄັ້ງ, ມີຄວາມຫ້າວຫັນ ແລະ ເປັນເຈົ້າການໃນການປະຕິບັດວຽກງານ.

## ໝວດທີ III
## ຄໍາມ້ອນທ້າຍ ແລະ ບັນຍັດອື່ນໆ

**ມາດຕາທີ່ 19**: ຂອບເຂດການຈັດຕັ້ງປະຕິບັດ.

ກົດລະບຽບສະບັບນີ້ ໃຊ້ສະເພາະວຽກງານຝຶກຫັດວິຊາຊີບຄູ ຂອງວິທະຍາໄລຄູສົງອີງຕື້ ແລະ ມີຜົນບັງຄັບໃຊ້ຈົນກ່ວາຈະມີການຕົກລົງເຫັນດີຍົກເລີກ ຫຼື ປ່ຽນແປງໃໝ່.

**ຜູ້ອໍານວຍການ**

**ຮ່າງທີ 13:**

## ເນື້ອໃນການປະຖົມນິເທດກ່ຽວກັບ
## ວຽກງານຝຶກຫັດວິຊາຊີບຄູແຕ່ລະໂຮງຮຽນສາມັນສິງສົ່ງບ່ອນລົງຝຶກຫັດສອນ

## I. ຈຸດປະສົງ:

- ເພື່ອເປັນການພົບປະສ້າງສັນຄວາມຮູ້ຈັກຄຸ້ນເຄີຍ, ສາມັກຄີຮັກແພງ, ສະນິດສະໜົມເບື້ອງຕົ້ນລະຫວ່າງ ຄະນະອຳນວຍການໂຮງຮຽນ, ຄະນະອະນຸອຳນວຍການຄວບຄຸມວຽກງານສິດສອນຄູ-ອາຈານ, ພະນັກງານ ວິຊາການທີ່ກ່ຽວຂ້ອງ, ຄູປະຈຳຫ້ອງກັບຄະນະຄູນຳພາຝຶກຫັດ ແລະ ນັກສຶກສາຄູຝຶກຫັດ.
- ເພື່ອຄວາມເປັນເອກະພາບໃນການດຳເນີນງານ ແລະ ທັງເປັນການແນະແນວຊ່ວຍໃຫ້ຄວາມຮູ້ເບື້ອງຕົ້ນ ແກ່ນັກສຶກສາຄູຝຶກຫັດກ່ຽວກັບສະພາບຕ່າງໆຂອງໂຮງຮຽນ.
- ເພື່ອເປັນການໃຫ້ຂໍ້ມູນຕ່າງໆກ່ຽວກັບການຂຽນບົດລາຍງານຂອງນັກສຶກສາຄູຝຶກຫັດ.

## II. ເນື້ອໃນການປະຖົມນິເທດ

### 1) ລາຍງານສະພາບທົ່ວໄປຂອງໂຮງຮຽນ:

- ລະບົບການບໍລິຫານໂຮງຮຽນຕາມສາຍຕັ້ງ ແລະ ສາຍຂວາງ.
- ໂຄງປະກອບສ້າງດ້ານບຸກຄະລາກອນ: ຊື່ ແລະ ນາມສະກຸນຄະນະອຳນວຍການ, ຄະນະຫ້ອງການ, ຄະນະ ໜ່ວຍງານ ແລະ ຄູປະຈຳຫ້ອງພ້ອມດ້ວຍໜ້າທີ່ຮັບຜິດຊອບຂອງແຕ່ລະທ່ານ.
- ຊື່, ທີ່ຕັ້ງຂອງໂຮງຮຽນ, ປະຫວັດຂອງໂຮງຮຽນໂດຍຫຍໍ້, ສະພາບອາຄານ, ສະຖານທີ່, ໂຕະ, ຕັ່ງ, ກະດານ, ພາຫານະ, ສື່ການສອນ ແລະ ອຸປະກອນຮັບໃຊ້ຕ່າງໆ.
- ຂອບເຂດຮັບຜິດຊອບຂອງໂຮງຮຽນ ແລະ ເງື່ອນໄຂຕ່າງໆ ໃນການຮັບເອົານັກຮຽນເຂົ້າຮຽນ.
- ສະເໜີຜ່ານໂຄງການຫຼັກສູດ, ແຜນການປີຮຽນ, ຕາຕະລາງສິດສອນຮໍ່າຮຽນ, ຈຳນວນຊົ່ວໂມງສອນຕໍ່ ອາທິດຂອງວິຊາຮຽນ-ສອນ ທີ່ກ່ຽວຂ້ອງໃນແຕ່ລະຊັ້ນຮຽນ.
- ຈຳນວນຄູ-ອາຈານ, ປະສົບການຂອງຄູໃນວິຊາທີ່ກ່ຽວຂ້ອງ: ຄູຊັ້ນກາງ, ຊັ້ນສູງ ແລະ ຊັ້ນປະລິນຍາໂທ (ເປັນຄູພຣະສົງ-ຄະລືຫັດຈັກອົງ/ທ່ານ).
- ຈຳນວນນັກຮຽນທັງໝົດ, ນັກຮຽນແຕ່ລະຊັ້ນ, ແຕ່ລະຫ້ອງ , ເປັນຄູບາ ຫຼື ສາມະເນນ.
- ອັດຕາສ່ວນຂຶ້ນຫ້ອງ, ຄ້າງຫ້ອງ, ປະລະການຮຽນ ແລະ ເສັງຈົບຊັ້ນຂອງນັກຮຽນປີຜ່ານມາຈັກສ່ວນຮ້ອຍ.
- ກົດລະບຽບຂອງໂຮງຮຽນພົນການປະຕິບັດລະບຽບ (ດ້ວຍຄວາມຕື່ນຕົວ, ຂາດໂຮງຮຽນ, ລັກເມືອຕາມລຳພັງ)
- ສະພາບທົ່ວໄປຂອງຊຸມຊົນອ້ອມຂ້າງໂຮງຮຽນ: ວັດ, ຊາວພຸດ ແລະ ອົງການຈັດຕັ້ງສັງຄົມຕ່າງໆຕະຫຼອດ ຮອດປະຊາຊົນໃຫ້ການຮ່ວມມືແນວໃດ.

### 2) ສະພາບການສິດສອນ-ຮໍ່າຮຽນ:

- ເຂົ້າຮຽນຈັກຕອນໃນໜຶ່ງມື້ເຊົ້າ-ເລີກຈັກໂມງປະຕິບັດຊົ່ວໂມງຮຽນໜຶ່ງຈັກນາທີມື້ໜຶ່ງຈັກຊົ່ວໂມງ.
- ການນຳໃຊ້ວິທີສິດສອນ (ແບບເກົ່າ ຫຼື ແບບໃໝ່ ຫຼື ປະສົມປະສານທັງເກົ່າ ແລະ ໃໝ່).
- ຄວາມຮັບຜິດຊອບຂອງຄູ-ອາຈານ ວິຊາສະເພາະ ແລະ ນັກຮຽນທີ່ກ່ຽວຂ້ອງກັບການສິດສອນຮໍ່າຮຽນເວົ້າທົ່ວໄປ (ຫ້າວຫັນ, ເອົາໃຈໃສ່, ເຮັດພໍແລ້ວ, ເຮັດຕາມຄຳສັ່ງ, ຕ່າງຄົນຕ່າງເຮັດ ແລະ ມີຫົວຄິດປະດິດສ້າງ).
- ຈັດກິດຈະກຳ-ເຄື່ອນໄຫວນອກຫຼັກສູດ.

**3). ການບໍລິຫານຂອງຄະນະອຳນວຍການເອົາໃຈໃສ່ຕົ້ນຕໍດ້ານ:**

- ວິຊາການ - ການບໍລິຫານ
- ການຈັດກອງປະຊຸມ - ການພັດທະນາຊຸມຊົນ-ຂົນຂວາຍ

+ ສາຍພົວພັນລະຫ່ວາງໂຮງຮຽນກັບວັດ, ກັບຊຸມຊົນອ້ອມຂ້າງກັບອົງການຈັດຕັ້ງສັງຄົມບຸກຄົນທົ່ວໄປ, ຜົນໄດ້ຮັບ.

## ❖ ຜົນງານ ແລະ ສະພາບທີ່ພົ້ນເດັ່ນ:

- ດ້ານວິຊາການ - ການສິດສອນຮໍ່າຮຽນ
- ດ້ານບໍລິຫານ - ບໍລິການ
- ດ້ານການເຄື່ອນໄຫວອື່ນໆ

## 4). ທີ່ມາຂອງແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການປັບປຸງບູລະນະອາຄານ, ສະຖານທີ່ການໃຊ້ຈ່າຍໃນການບໍລິຫານຕ່າງໆ:

ເງິນເດືອນຄູຖາວອນ, ຄູສັນຍາຈ້າງ, ນໍ້າ, ໄຟ ແລະ ອື່ນໆ.

## III. ຜູ້ເຂົ້າຮ່ວມໃນການຈັດປະຖົມນິເທດ.

1). ຄະນະອຳນວຍການໂຮງຮຽນ - ອະນຸກຳມະການຄວບຄຸມວຽກງານຝຶກຫັດ.

2). ຄູ-ອາຈານວິຊາສະເພາະ-ຄູປະຈຳຫ້ອງທີ່ກ່ຽວຂ້ອງ.

3). ຄູ-ອາຈານນຳພາຝຶກຫັດ.

4). ຄູຝຶກຫັດທຸກອົງ.

5). ນາຍບ້ານ ບ້ານບ່ອນໂຮງຮຽນຕັ້ງຢູ່.

6). ພະນັກງານອື່ນໆທີ່ກ່ຽວຂ້ອງ.

ຄູ-ອາຈານນຳພາຝຶກຫັດແນະນຳຈັດແບ່ງຫ້ອງສອນ, ວິຊາສອນ, ຈັດແບ່ງຈຸຄູປະຈຳຫ້ອງພ້ອມດຽວກັນກໍ່ປຶກສາຫາລືກ່ຽວກັບວຽກງານວິຊາສະເພາະ ແລະ ບັນຫາອື່ນໆ ເພື່ອຄວາມເປັນເອກະພາບໃນການດຳເນີນວຽກງານໃຫ້ລຸລ່ວງໄປດ້ວຍດີ.

ຄະນະອຳນວຍການ ຫຼືຄະນະອະນຸກຳມະການຄວບຄຸມວຽກງານຝຶກຫັດ ປະຈຳໂຮງຮຽນໃຫ້ການແນະແນວກ່ຽວກັບວຽກງານຝຶກຫັດວິຊາຊີບຄູແກ່ຄູຝຶກຫັດ.

## IV. ວິທີປະຕິບັດ:

1. ໂດຍປະຕິຕາມແຜນການເຄື່ອນໄຫວວຽກງານຝຶກຫັດ ປະຈຳສົກຮຽນ 20...-20...ໃຫ້ຈັດເອົາມື້ໃດມື້ໜຶ່ງໃນອາທິດທຳອິດຂອງການລົງຝຶກຫັດເປັນມື້ປະຖົມນິເທດປະຈຳໂຮງຮຽນ.
2. ຄະນະອຳນວຍການຫຼືພາບສ່ວນທີ່ກ່ຽນຂ້ອງເປັນຜູ້ລາຍງານຕາມເນື້ອໃນວຽກງານໃນຂໍ້ທີ່ II, ໂດເຕົ້າໂຮມເອົາວຽກງານຕ່າງໆ ທີ່ກຳນົດໄວ້ໃນຂໍ້ທີ່ III ຂອງເອກະສານສະບັບນີ້ເປັນຜູ້ເຂົ້າໂດຍປະສານງານຮ່ວມຂອງຄູນຳພາຝຶກຫັດຈາກວິທະຍາໄລຄູສົງອົງຕື້.
3. ນາຍບ້ານ ລາຍງານສະພາບຕ່າງໆ ແລະ ແຜນພັດທະນາຂອງບ້ານໃນຕໍ່ໜ້າ-ຍາວນານ.

**<u>ຮ່າງທີ 14:</u>**

# ບົດລາຍງານ

## (ໄລຍະການຝຶກຫັດ)

**I. <u>ສະພາບຈຸດພິເສດລວມ:</u>**

1) <u>ຈຸດພິເສດລວມຂອງໂຮງຮຽນ:</u>
   - ອາຄານຮຽນ, ຫ້ອງຮຽນ, ເຄື່ອງອຸປະກອນການສອນ-ການຮຽນ.
   - ຈຳນວນຄູ-ອາຈານ, ລະດັບ, ປະສົບການ, ເສດຖະກິດ.
   - ແຫຼ່ງທຶນ-ລາຍຮັບຕ່າງໆ.
   - ແລະ ອື່ນໆ
2) <u>ຈຸດພິເສດຂອງຄູຝຶກຫັດ:</u>
   - ຈຳນວນຢູ່ ວັດເດີມ (ໃກ້, ໄກ) ພັກຢູ່ກັບທີ່ ຫຼື ຍົກຍ້າຍ.
   - ປະສົບການ: ເປັນ ພ/ງ ຄູ ຫຼື ນັກຮຽນສາມັນ, ອາວຸໂສ ຫຼື ໜຸ່ມ.
   - ຄວາມຮັບຜິດຊອບຕໍ່ກົດລະບຽບ, ຕໍ່ວຽກງານທີ່ຖືກມອບໝາຍ ແລະ ອື່ນໆ.

**II. <u>ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຝຶກຫັດ:</u>**

1) <u>ວຽກງານສິດສອນ:</u> (ໄດ້ປະຕິບັດແນວໃດ).
2) <u>ວຽກຄູປະຈຳຫ້ອງ:</u> (ໄດ້ຈັດຕັ້ງປະຕິບັດແນວໃດ).
3) <u>ວຽກຊຸມຊົນ ແລະ ເຄື່ອນໄຫວຕ່າງໆ:</u> (ໄດ້ຈັດຕັ້ງປະຕິບັດແນວໃດ ແລະ ໄດ້ເຄື່ອນໄຫວວຽກງານຫຍັງແດ່-ແນວໃດ).
4) <u>ວຽກວິໄຈ:</u> ໄດ້ຈັດຕັ້ງປະຕິບັດແນວໃດ.

**III. <u>ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສາເຫດ ແລະ ບັນຫາຕ່າງໆ:</u>**

**IV. <u>ຂໍ້ສະເໜີ:</u>**

**V. <u>ແຜນວຽກງານຕ່າງໆ ທີ່ຈະປະຕິບັດໃນອາທິດຕໍ່ໄປ.</u>**

**ຮ່າງທີ 15:**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສຶກສາທິການ ແລະ ກິລາ ແຂວງ............................
ຫ້ອງການສຶກສາທິການ ແລະ ກິລາ ເມືອງ............................
ໂຮງຮຽນມັດທະຍົມ…………..............………….............. ເລກທີ........../................
ລົງວັນທີ............................

## ແຜນການເຄື່ອນໄຫວໝົດຊຸດຝຶກຫັດວິຊາຊີບຄູ

- ອີງຕາມ ແຜນການເຄື່ອນໄຫວວຽກງານຝຶກຫັດວິຊາຊີບຄູ ຂອງວິທະຍາໄລຄູສົງອີງຕື້ ປະຈໍາສົກຮຽນ............;
- ອີງຕາມ ແຜນເຄື່ອນໄຫວຂອງໂຮງຮຽນມັດທະຍົມ ....................................................................;
- ອີງຕາມ ໜ້າວຽກຕົວຈິງທີ່ນັກຝຶກຫັດຈະຕ້ອງໄດ້ປະຕິບັດ.

**I. ຈຸດປະສົງ ແລະ ລະດັບຄາດໝາຍ**

**ກ. ຈຸດປະສົງ:**

- ເພື່ອເປັນບ່ອນອີງໃຫ້ແກ່ການປະຕິບັດວຽກງານຝຶກຫັດໃນໄລຍະຝຶກຫັດວິຊາຊີບຄູ.
- ເພື່ອເຮັດໃຫ້ການປະຕິໜ້າວຽກເປັນລະບົບຕໍ່ເນື່ອງ ແລະ ມີປະສິດທິພາບ.

**ຂ. ລະດັບຄາດໝາຍ:**

- ນັກສຶກສາຄູຝຶກຫັດແຕ່ລະຄົນມີແຜນການໃນການຈັດຕັ້ງປະຕິບັດວຽກງານຕ່າງໆໃນບັນຝຶກຫັດວິຊາຊີບຄູ.
- ການປະຕິບັດວຽກງານຂອງນັກສຶກສາຄູຝຶກຫັດໃຫ້ໄປຕາມແຜນການ, ເປັນລະບົບຕໍ່ເນື່ອງ ແລະ ມີປະສິດທິຜົນ.

**II. ເນື້ອໃນທີ່ຈະປະຕິບັດ**

1. ວຽກງານແນວຄິດຄຸນສົມບັດ: ການສໍາຫຼວດກວດກາ, ຮ່ວມຟັງປາຖະກະຖາ, ການປະຕິບັດລະບຽບ, ຄວາມສາມັກຄີ, ຄວາມເປັນແບບຢ່າງ (ຄາດໝາຍສູ້ຊົນຄິດໄລ່ເປັນຄັ້ງ.............ຄັ້ງ).
2. ວຽກງານເກັບກໍາສະພາບໂຮງຮຽນ: ການເກັບກໍາຂໍ້ມູນ, ການຂຽນບົດລາຍງານ… (ຄາດໝາຍສູ້ຊົນຄິດໄລ່ເປັນຄັ້ງ.............ຄັ້ງ).
3. ວຽກງານສິດສອນ: (ການສ້າງແຜນການສອນ, ແຕ່ງບົດສອນ, ສື່ການສອນ, ສອນຕົວຈິງ, ຮ່ວມໂມງສອນ, ຖອດຖອນບົດຮຽນ, ຂຽນບົດລາຍງານ…); ກິດຈະກໍາສົ່ງເສີມການຮຽນ-ການສອນເຊັ່ນ: ງານຖາມ - ຕອບວິທະຍາສາດ, ສອນເພີ່ມນັກຮຽນທີ່ຮຽນອ່ອນ (ຄາດໝາຍສູ້ຊົນຄິດໄລ່ເປັນຄັ້ງ.............ຄັ້ງ).
4. ວຽກງານຄູປະຈໍາຫ້ອງ:

- ລະບົບການຈັດຕັ້ງຫ້ອງ, ແຜນການເຄື່ອນໄຫວວຽກຄູປະຈໍາຫ້ອງ, ແຜນກິດຈະກໍາປະຈໍາອາທິດ, ບົດສະຫຼຸບປະຈໍາອາທິດ, ບັນທຶກປະຈໍາວັນ, ຕິດຕາມພຶດຕິກໍາຂອງນັກຮຽນ, ຕິດຕາມບັນທຶກຜົນການຮຽນ ແລະ ສໍາຫຼວດຫ້ອງ (ຄາດໝາຍສູ້ຊົນຄິດໄລ່ເປັນຄັ້ງ.............ຄັ້ງ).
- ວຽກງານສຶກສາປະຫວັດນັກຮຽນ, ຊອກຮູ້ນັກຮຽນທີ່ມີບັນຫາເຊັ່ນ: ຮຽນອ່ອນ, ຂາດຮຽນ, ຂີ້ດື້, ຫຼົງຈາກ ນັ້ນພົວພັນກັບຄູປະຈໍາຫ້ອງເກົ່າ, ໂຮງຮຽນ, ພໍ່ແມ່ຜູ້ປົກຄອງ/ເຈົ້າອະທິການວັດ, ອໍານາດການປົກຄອງ, ເກັບກໍາຂໍ້ມູນເພື່ອຫາວິທີການແກ້ໄຂ ແລະ ປັບປຸງ (ຄາດໝາຍສູ້ຊົນຄິດໄລ່ເປັນຄັ້ງ.............ຄັ້ງ).

5. ວຽກງານການເຄື່ອນໄຫວນອກຫຼັກສູດ: ເຜີຍແຜ່ທຳມະ, ອະນາໄມ, ອອກແຮງງານ, ຂ່າວສານ, ປ້ອງກັນ (ຄາດໝາຍສູ້ຊົນຄິດໄລ່ເປັນຄັ້ງ.............ຄັ້ງ).
6. ວຽກງານພັດທະນາຊຸມຊົນ: ພົວພັນອຳນາດການປົກຄອງບ້ານ, ຂົນຂວາຍປະຊາຊົນເຂົ້າມາມີສ່ວນຮ່ວມໃນວຽກງານການສຶກສາ, ເອົາວຽກການສຶກສາລົງສູ່ທ້ອງຖິ່ນ, ຊ່ວຍວຽກປະຊາຊົນແບບລວມໝູ່ເຊັ່ນ: ການສ້ອມແປງທາງ, ຫ້ອງນ້ຳ, ການສອນປະຊາສຶກສາ ແລະ ອື່ນໆ (ຄາດໝາຍສູ້ຊົນຄິດໄລ່ເປັນຄັ້ງ.............ຄັ້ງ).

## III. ການຈັດຕັ້ງປະຕິບັດ

- ເຜີຍແຜ່ແຜນການ, ຈັດຕັ້ງປະຕິບັດ, ຕິດຕາມ, ກວດກາ ແລະ ສະຫຼຸບຖອດຖອນບົດຮຽນ.

ທີ່…………..................………, ວັນທີ

........./……../….......

ຜູ້ອຳນວຍການໂຮງຮຽນ ຫົວໜ້າຂະບວນຝຶກຫັດ

**ໝາຍເຫດ:**

- ຫົວໜ້າຂະບວນຝຶກຫັດສົມທົບກັບຄະນະອຳນວຍການໂຮງຮຽນ ແລະ ຂຽນແຜນການເຄື່ອນໄຫວໝົດຊຸດຝຶກຫັດດັ່ງທີ່ກ່າວມາແລ້ວນັ້ນ.

**ຮ່າງທີ 16:**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ພະແນກສຶກສາທິການ ແລະ ກິລາ ແຂວງ………………
ຫ້ອງການສຶກສາທິການ ແລະ ກິລາ ເມືອງ…………..
ໂຮງຮຽນ........................................... ເລກທີ............./......
ທີ່ ...................................., ວັນທີ............20....

# ບົດສະຫຼູບໝົດຊຸດຝຶກຫັດ

ຂະບວນ.............................................................; ສົກຮຽນ...........................

## I. ບ່ອນອີງ.

## II. ສະພາບຈຸດພິເສດ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ.

ກ. ສະພາບຈຸດພິເສດ...................................................................................
ຂ. ຂໍ້ສະດວກ.............................................................................................
ຄ. ຂໍ້ຫຍຸ້ງຍາກ...........................................................................................

## III. ວຽກງານການເຄື່ອນໄຫວຕົວຈິງແຕ່ລະດ້ານ.

1. **ວຽກງານແນວຄິດຄຸນສົມບັດ.** (ການສຳຫຼວດກວດກາ, ຮ່ວມຟັງປາຖະກາຖາການປະຕິບັດລະບຽບ, ຄວາມສາມັກຄີ, ຄວາມເປັນແບບຢ່າງ....)
   ກ. ດ້ານດີ.
   ຂ. ດ້ານອ່ອນ
2. **ການລາຍງານສະພາບໂຮງຮຽນ.** (ການເກັບກາຂໍ້ມູນ, ການຂຽນບົດລາຍງານ.......)
   ກ. ດ້ານດີ
   ຂ. ດ້ານອ່ອນ

**3. ວຽກງານສິດສອນ.** ( ການສ້າງແຜນການສອນ, ແຕ່ງບົດສອນ, ສື່ການສອນ, ຮ່ວມໂມງສອນ, ຖອດຖອນບົດຮຽນ, ຂຽນບົດລາຍງານ.........) ກິດຈະກຳສົ່ງເສີມການຮຽນ-ການສອນເຊັ່ນ: ງານຖາມ-ຕອບວິທະຍາສາດ.
ກ. ດ້ານດີ: ຄາດໝາຍສູ້ຊົນ (ຄິດໄລ່ເປັນເປີເຊັນ ຫຼື ເປັນຄັ້ງ)……………..
ຂ. ດ້ານອ່ອນ

**4. ວຽກຄູປະຈຳຫ້ອງ.**

- ລະບົບການຈັດຕັ້ງຫ້ອງ, ແຜນການເຄື່ອນໄຫວວຽກຄູປະຈຳຫ້ອງ, ແຜນກິດຈະກຳປະຈາອາທິດ, ບົດສະຫຼູບປະຈຳອາທິດ, ບັນທຶກປະຈຳວັນ, ຕິດຕາມບັນທຶກຜົນການຮຽນ ແລະ ສຳຫຼວດຫ້ອງ.

ກ. ດ້ານດີ
ຂ. ດ້ານອ່ອນ
ຄາດໝາຍສູ້ຊົນ (ຄິດໄລ່ເປັນເປີເຊັນ ຫຼື ເປັນຄັ້ງ)...................

- ວຽກງານສຶກສາປະຫວັດນັກຮຽນ ຊອກຮູ້ນັກຮຽນທີ່ມີບັນຫາເຊັ່ນ: ຮຽນອ່ອນ, ຂາດຮຽນ, ຂີ້ດື້, ພົວພັນກັບຜູ້ປົກຄອງ, ອຳນາດການປົກຄອງ, ໂຮງຮຽນ, ເກັບຂໍ້ມູນ ເພື່ອຫາວິທີແກ້ໄຂ ແລະ ປັບປຸງ.

  ກ. ດ້ານດີ

  ຂ. ດ້ານອ່ອນ

  ຄາດໝາຍສູ້ຊິນ (ຄິດໄລ່ເປັນເປີເຊັນ ຫຼື ເປັນຄັ້ງ)....................

- ວຽກງານພັດທະນາຊຸມຊົນ: ນຳພານັກຮຽນພາຍໃນຫ້ອງປະຕິບັດຕາມແຜນຂອງໜ່ວຍງານພັດທະນາຊຸມຊົນ.

  ຄາດໝາຍສູ້ຊິນ (ຄິດໄລ່ເປັນເປີເຊັນ ຫຼື ເປັນຄັ້ງ)....................

**5. ການສ້າງແຟນປະສົມ.**

ກ. ດ້ານດີ

ຂ. ດ້ານອ່ອນ

**6. ວຽກງານການເຄື່ອນໄຫວນອກຫຼັກສູດ** (ຂ່າວຄສານ, ແຮງງານ,...).

ກ. ດ້ານດີ

ຂ. ດ້ານອ່ອນ

**7. ການຂຽນບົດລາຍງານ.**

## IV. ສາເຫດທີ່ພາໃຫ້ມີຈຸດດີ, ຈຸດອ່ອນ ແລະ ບົດຮຽນທີຖອດຖອນໄດ້.

ກ. ສາເຫດທີ່ພາໃຫ້ເກີດຈຸດດີ

ຂ. ສາເຫດທີ່ພາໃຫ້ເກີດຈຸດອ່ອນ

ຄ. ບົດຮຽນທີ່ຖອດຖອນໄດ້

## V. ຂໍ້ສະເໜີ.

......................................................................................................................................

......................................................................................................................................

**ຜູ້ອຳນວຍການໂຮງຮຽນ** **ຄະນະຂະບວນຝຶກຫັດ**

**<u>ຮ່າງທີ 17:</u>**

## ບົດສອນຕົວຢ່າງ (UBD)

## ບົດສອນ

| | |
|---|---|
| ວິຊາ ......................................... | ຫ້ອງຮຽນ ...................... |
| ບົດທີ ....................................... | ວັນ, ເດືອນ, ປີ ................ |
| ຫົວຂໍ້: ...................................... | ເວລາ ........................... |

<table>
<tr><td colspan="2"><u>ຂັ້ນຕອນທີ 1(stage 1): ຜົນຮັບທີ່ຕ້ອງການ (Desired Results)</u></td></tr>
<tr><td colspan="2"><u>ເປົ້າໝາຍລວມ: (goal)</u><br>-ເປັນຫຍັງເຈົ້າຈຶ່ງສອນວິຊານີ້? ວິຊານີ້ແທດເໝາະກັບຊີວິດປະຈຳວັນນັກຮຽນຄືແນວໃດ?</td></tr>
<tr><td>ຄວາມເຂົ້າໃຈ: (Understanding)<br>-ຈຸດປະສົງຂອງບົດນີ້ມີຫຍັງແດ່?</td><td>ຄຳຖາມຫຼັກ: (Questions)<br>-ຄຳຖາມຫຼັກທີ່ເຈົ້າຈະຖາມນັກຮຽນ ແມ່ນຈະໃຊ້ຄຳຖາມແບບໃດເຮັດໃຫ້ນັກຮຽນສົນໃຈໃນຂະບວນການຮຽນ ຫຼື ບໍ່? ເພື່ອຮັບປະກັນວ່າເຂົາເຈົ້າໄດ້ຮຽນຮູ້?<br>-ທ່ານສາມາດໃຊ້ SCAMPER ເພື່ອຖາມຄຳຖາມຫຼັກ.</td></tr>
<tr><td><u>ຄວາມຮູ້: (knowledge)</u><br>-ເຈົ້າຢາກໃຫ້ນັກຮຽນຮູ້ຫຍັງ?<br>-ຄາດໝາຍສະເພາະດ້ານຄວາມຮູ້?<br>-ແນວຄວາມຄິດຫຼັກຂອງບົດນີ້ແມ່ນຫຍັງ?</td><td><u>ທັກສະ: (Skills)</u><br>-ຄາດໝາຍສະເພາະດ້ານທັກສະ?<br>-ເຈົ້າຢາກໃຫ້ນັກຮຽນສາມາດເຮັດຫຍັງ?<br>(ໃຫ້ຄິດເຖິງທັກສະດ້ານການວິໄຈ, ປະເມີນ ແລະ ດ້ານປະດິດສ້າງ)</td></tr>
<tr><td colspan="2"><u>ຂັ້ນຕອນທີ 2: (Stage2) ຫຼັກຖານປະເມີນ (Evidence)</u></td></tr>
<tr><td><u>ໜ້າວຽກຫຼັກ:(Task)</u><br>-ອີງຕາມຂາດໝາຍດ້ານທັກສະຂອງເຈົ້າ, ເຈົ້າຈະໃຫ້ນັກຮຽນເຮັດໜ້າວຽກ/ກິດຈະກຳຫຍັງ (ໃນເວລາກຳລັງຮຽນ) ຊຶ່ງເຈົ້າສາມາດຮູ້ໄດ້ວ່າທັກສະທີ່ເຈົ້າຕັ້ງໄວ້ນັ້ນແມ່ນໄດ້ບັນລຸ?<br>-ເຈົ້າສາມາດໃຊ້ GRASPS ເພື່ອສ້າງສະພາບການຮຽນຮູ້ເຊິ່ງເຈົ້າຈະສາມາດປະເມີນໄດ້ວ່າຜູ້ຮຽນໄດ້ຮຽນຮູ້ ຫຼື ບໍ່? ເຈົ້າສາມາດໃຫ້ນັກຮຽນໃຊ້ແຜນວາດຊ່ວຍຈື່ (mind maps) ໃນກິດຈະກຳເປັນກຸ່ມ.</td><td><u>ຫຼັກຖານອື່ນໆ: (other Evidence)</u><br>-ອີງຕາມຄາດໝາຍດ້ານທັກສະຂອງເຈົ້າ, ຍັງມີຫຼັກຖານອື່ນໆ/ກິດຈະກຳຫຍັງທີ່ເຈົ້າຈະໃຫ້ນັກຮຽນສະແດງອອກ/ເຮັດ ເພື່ອຢັ້ງຢືນວ່າເຂົາເຈົ້າໄດ້ຮຽນຮູ້?<br><u>ຕົວຢ່າງ:</u> ໃຫ້ວຽກບ້ານ, ຕັ້ງຄຳຖາມ, ແຕ່ງບົດ ...</td></tr>
<tr><td colspan="2"><u>ຂັ້ນຕອນທີ 3: (Stage 3) ແຜນການສອນ</u><br>ຈະອອກແບບການສອນບົດຮຽນຂອງເຈົ້າແນວໃດທີ່ຈະເຮັດໃຫ້ການຮຽນຮູ້ເກີດຂຶ້ນ? ນັກຮຽນຈະເຮັດກິດຈະກຳໃດເພື່ອຮັບປະກັນໃຫ້ນັກຮຽນໄດ້ຄວາມຮູ້ທີ່ພຽງພໍເພື່ອບັນລຸທັກສະທີ່ວາງໄວ້ (ໂດຍນຳໃຊ້ WHERETO, SCAMPERS).</td></tr>
</table>

-ຄູນຳສະເໜີບົດຮຽນຕາມລຳດັບ ໂດຍຮູບແບບການອະທິບາຍ, ຕັ້ງຄຳຖາມ ແລະ ອ່ານໃຫ້ຈົດ.

**<u>ບົດທີ ......</u>**

**<u>ຫົວຂໍ້: ...........................</u>**

**I. ຂັ້ນນຳ (ເວລາ .....)**

-ເນື້ອໃນບົດຮຽນ?

-ກິດຈະກຳ?

**II. ຂັ້ນສອນ (ເວລາ.....)**

-ເນື້ອໃນບົດຮຽນ?

-ກິດຈະກຳ?

**III. ຂັ້ນສະຫຼຸບ (ເວລາ.....)**

-ເນື້ອໃນບົດຮຽນ?

-ກິດຈະກຳ?

**IV. ຂັ້ນປະເມີນ (ເວລາ.....)**

-ເນື້ອໃນບົດຮຽນ?

-ກິດຈະກຳ?

**V. ຂັ້ນຕັກເຕືອນ (ເວລາ.....)**

-ຄຳຕັກເຕືອນ )

ທີ່ ..............................................., ວັນທີ ........................

ຜູ້ອຳນວຍການ ວິຊາການ ຄູປະຈຳວິຊາ ຄູຝຶກຫັດ

**ຮ່າງທີ 18:**

# ບົດສອນຕົວຢ່າງ (UBD)

# Lesson plan

| | |
|---|---|
| Subject: ............................................ | Class: ...................... |
| Unit/lesson: ...................................... | Date: ....................... |
| Topic: ............................................. | Time: ....................... |

| Stage 1: (Desired Results) | |
|---|---|
| G (goal):<br>Why do you teach this subject? How is that important in the real life?<br>-Ss will be able to ………………………………………………………………………… | |
| U (Understanding): What are the goals of the lesson?<br>-Ss will be understand<br>………………………… | Q (Questions):<br>-What are the main questions that you will be asks Ss?<br>-How do you make your Ss interesting/not with the lesson or learning process?<br>-You can use (SCAMPER) for to asks the main questions. |
| K (knowledge):<br>What do you need Ss to know?<br>What are the specific expected of the knowledge?<br>What are the main ideas of the lesson? | S(Skills)<br>-Expected of the skills?<br>What do you need Ss be able to?<br>(research, evaluate, invention …) |
| **Stage 2 : (Evidence)** | |
| T (Task)<br>-According to your skills, what are the tasks or activities will you give Ss to do while learning?<br>So that shows the results of the goals/skills that you were build?<br>-You can use (GRASPS) in the teaching/learning process for you can evaluated that your Ss be able or not?<br>-You can give your Ss use (mind maps) in the group activities. | OE (other Evidence)<br>-According to your skills, what are the skills/activities that you give Ss show out/do?<br>Example: give homework, questions, report... |

## Stage 3: Teaching/learning plan

How do you design your lesson plan to be useful and full knowledge? What are the activities will you give Ss to do? It should be related to your goals and skills of the lesson.
Using: (WHERETO, SCAMPERS).

-T: Introduction with steps by explains, questions, and take note...

**Unit/Lesson**

**Topic: ..........................**

**I. Greeting ( ..... minutes)**
-activities?

**II. Review or warm up (…… minutes)**
-activities?

**III. presentation (.... minutes)**
-lesson/contents?
-activities?

**IV. Practice (…… minutes)**
- lesson/contents?
-activities?

**V. Production (..... minutes)**
-lesson/contents?
-activities?
-conclusion?

**VI. Setting homework.**
-giving homework?
-warning?

At .............................................., date........................

| **Director** | **Academic** | **Teacher's subject** | **Training teacher** |
|---|---|---|---|

**ຮ່າງທີ 19:**

# ບົດສອນຕົວຢ່າງ

## ບົດສອນ

ວິຊາ: ........................................ ຫ້ອງຮຽນ................
ບົດທີ: ....................................... ວັນ, ເດືອນ, ປີ ................
ຫົວຂໍ້: ....................................... ເວລາ: ..............

➢ **ຈຸປະສົງດ້ານເນື້ອໃນ:**

- ນັກຮຽນຈະ......................................................................................................
- ນັກຮຽນຈະ......................................................................................................
- ນັກຮຽນຈະ......................................................................................................

**ກິດຈະກຳການຮຽນ-ການສອນ:**

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | | ເວລາ | ຊື່ການສອນ | ປະເມີນຜົນ |
|---|---|---|---|---|---|---|
| | | ຄູ | ນັກຮຽນ | | | |
| | | I. ຂັ້ນນຳ | | | | |
| | | II. ຂັ້ນສອນ | | | | |
| | | III. ຂັ້ນສະຫຼຸບ | | | | |
| | | IV. ຂັ້ນວັດ ແລະ ປະເມີນຜົນ | | | | |
| | | V. ຂັ້ນຕັກເຕືອນ | | | | |

ທີ່ ................................................, ວັນ, ເດືອນ, ປີ........................

**ຄະນະອຳນວຍການ ຫົວໜ້າຫ້ອງການວິຊາການ ອາຈານປະຈຳວິຊາ ນັກສຶກສາຄູຝຶກຫັດ**

**ຮ່າງທີ 20:**

# ບົດສອນຕົວຢ່າງ

# Lesson plan

Subject: ............................................ Class: ………..
Unit/lesson: ....................................... Date: ………..
Topic: ............................................... Time: …..…...

- **Communicative Aims:**
  - Ss will……………………………………………………………………
  - Ss will………………………………………………………………………
  - Ss will………………………………………………………………………
- **Educative Aims:**
  - T:………………………………………………………………………

**Learning and Teaching Activitieas:**

| Aims | Topic/lesson | T's activity | Ss' activity | Time | Materials/ Teaching Aids | Evaluation |
|---|---|---|---|---|---|---|
| -Ss will be able to | | ➢ **Greeting:** -T: … | -Ss: … | | | |
| | | ➢ **Review/warm up:** -T: … | -Ss: … | | | |
| | | ➢ **Presentation:** -T:… | -Ss: … | | | |
| | | ➢ **Practice:** -T:… | -Ss: … | | | |
| | | ➢ **Production:** -T:… | -Ss: … | | | |
| | | ➢ **Setting homework:** -T:… | -Ss: … | | | |

At ............................................., date.......................

Director Academic Teacher's subject Training teacher

**<u>ຮ່າງທີ 21:</u>**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ
ວິທະຍາໄລຄູສົງອົງຕື້

ເລກທີ........../ວຄສ.ອຕ.ພກ
ນະຄອນຫຼວງວຽງຈັນ, ວັນທີ............20....

## ໃບສັງລວມຄະແນນວຽກງານຝຶກຫັດວິຊາຊີບຄູ

## ສົກຮຽນ 20...- 20....

ຂະບວນຝຶກຫັດໂຮງຮຽນ ..............................................................................

| ລ/ດ | ຊື່ ແລະ ນາມສະກຸນ | ສາຍວິຊາ | ວຽກສິດສອນ | ວຽກຄູປະຈຳຫ້ອງ | ວຽກຊຸມຊົນ | ວຽກວິໄຈໃນຫ້ອງຮຽນ | ຄະແນນລວມ | ເກຣດ | ໝາຍເຫດ |
|---|---|---|---|---|---|---|---|---|---|
| | | | 60% | 15% | 10% | 15% | 100% | | |
| 1 | | | | | | | | | |
| 2 | | | | | | | | | |
| 3 | | | | | | | | | |
| 4 | | | | | | | | | |
| 5 | | | | | | | | | |
| 6 | | | | | | | | | |
| 7 | | | | | | | | | |
| 8 | | | | | | | | | |
| 9 | | | | | | | | | |
| 10 | | | | | | | | | |
| 11 | | | | | | | | | |
| 12 | | | | | | | | | |

ນະຄອນຫຼວງວຽງຈັນ, ວັນທີ.....................20...

**ຜູ້ອຳນວຍການ**

# ສ່ວນປະກອບຂອງບົດໂຄງການຈົບຊັ້ນ

ບົດໂຄງການຈົບຊັ້ນ ປະກອບດ້ວຍ 5 ສ່ວນດັ່ງນີ້: ບົດນາ /ພາກສະເໜີ, ທົບທວນທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ, ວິທີການດໍາເນີນການຄົ້ນຄວ້າ, ຜົນຂອງການວິເຄາະຂໍ້ມູນ, ສະຫຼຸບ ແລະ ຂໍ້ສະເໜີ.

**+ ສ່ວນຕົ້ນຂອງບົດໂຄງການຈົບຊັ້ນ ຊຶ່ງປະກອບມີດັ່ງນີ້:**

- ໜ້າປົກນອກ
- ໜ້າປົກໃນ
- ບົດຄັດຫຍໍ້
- ຄໍາສະແດງຄວາມຂອບໃຈ
- ສາລະບານ

**+ ສ່ວນເນື້ອໃນຂອງບົດໂຄງການຈົບຊັ້ນເຊິ່ງປະກອບມີດັ່ງນີ້:**

- ບົດນໍາ/ພາກສະເໜີ
- ທົບທວນເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ
- ວິທີກໍານດໍາເນີນການວິໄຈ
- ຜົນຂອງກໍານວິເຄາະຂໍ້ມູນ
- ສະຫຼຸບ ແລະ ຂໍ້ສະເໜີແນະ ແນວທາງແກ້ໄຂ

**+ ສ່ວນທ້າຍຂອງບົດໂຄງການຈົບຊັ້ນຊຶ່ງປະກອບມີດັ່ງນີ້:**

- ເອກະສານອ້າງອີງ
- ເອກະສານຊ້ອນທ້າຍ
- ປະຫວັດຫຍໍ້ຜູ້ຂຽນ

## 1. ໜ້າປົກນອກ(Cover)

1.1 ໝາຍເຖິງໜ້າປົກທີ່ຫຸ້ມຕົວເຫຼັ້ມຂອງບົດໂຄງການຈົບຊັ້ນມີກາຮູບພາບໂລໂກ້ວິທະຍາໄລຄູສົງອິງຕື້ ຂະໜາດ 3.64×5.89 cm

1.2 ໂຄງການບົດຈົບຊັ້ນຂອງນັກສຶກສາໃສ່ໜ້າປົກສີເຫຼືອງ, ມີກາຮູບພາບໂລໂກ້ ວິທະຍາໄລຄູສົງອິງຕື້ຈັດຢູ່ເຄິ່ງກາງພໍດີ ແລະ ໃຫ້ຢູ່ດ້ານເທິງ ໂດຍຈັດໃຫ້ຕໍ່າກວ່າຂອງເຈ້ຍດ້ານເທິງ 2 cm

1.2 ຂຽນຄາວ່າ: ບົດໂຄງການຈົບຊັ້ນປະລິນຍາຕີ ວິທະຍາໄລຄູສົງອິງຕື້ສາຍຮຽນ .................... ໂດຍໃຊ້ Font: Phetsarath OT ຂະໜາດ 18 ໂຕເຂັ້ມ ຢູ່ກ້ອງກາໂລໂກ້ວິທະຍາໄລຄູສົງອິງຕື້ ໂດຍໃຊ້ໄລຍະຫ່າງ (spacing = Auto)

1.3. ຊື່ຫົວບົດໂຄງການຈົບຊັ້ນເປັນພາສາລາວ ຂະໜາດໂຕໜັງສື 16 ໂຕເຂັ້ມ, ຖ້າຫົວບົດຫາກຍາວກ່ວາ 1 ແຖວແມ່ນໃຫ້ພິມເປັນຮູບສາມຫລ່ຽມ

1.4. ຊື່ຫົວບົດໂຄງການຈົບຊັ້ນ ເປັນອັງກິດໃຫ້ໃຊ້ອັກສອນ time new roman

1.5. ຊື່ ແລະ ນາມສະກຸນຂອງຜູ້ຂຽນບົດໂຄງກໍານຈົບຊັ້ນພ້ອມຄໍານໍາໜ້ານາມເຊັ່ນ ພຣະ, ສາມາເນນ ແລະ ໃຫ້ພິມຢູ່ລະຫວ່າງກາງ ໂດຍໃຊ້ ຂະໜາດໂຕໜັງສື16 ໂຕເຂັ້ມ.

6. ຊືວິທະຍາໄລຄູສົງ ອິງຕື້ ແລະ ສົກສຶກສາທີຮຽນຮຽງບົດໂຄງການຈົບຊັ້ນ ໂດຍໃຊ້ ຂະໜາດໂຕໜັງສື18 ໂຕເຂັ້ມ.

**3. ໜ້າປົກໃນ (Title page**

ພິມຊື່ເລື່ອງທີ່ວິໄຈ(ຫາກຍາວກ່ວາ 1 ແຖວແມ່ນໃຫ້ພິມເປັນຮູບສາມຫລ່ຽມ), ຊື່ຂອງຜູ້ວິໄຈບໍ່ມີວຸດທິການສຶກສາຕໍ່ທ້າຍລະບຸວ່າບົດວິໄຈເປັນສ່ວນໜຶ່ງຂອງການສຶກສາຕາມຫລັກສູດ,

**4. ໜ້າອະນຸມັດ(Approval page)**

ບົດວິໄຈທີ່ຂຽນເປັນພາສາລາວໃຫ້ຂຽນໜ້າອະນຸມັດເປັນພາສາລາວ ແລະ ບົດວິໄຈທີ່ຂຽນເປັນອັງກິດໃຫ້ຂຽນໜ້າອະນຸມັດເປັນພາສາອັງກິດ

**5. ໜ້າຄຳຂອບໃຈ(Acknowledgement)**

ເປັນສ່ວນໜຶ່ງທີ່ຜູ້ວິໄຈກ່າວສະແດງຄຳຂອບໃຈຜູ້ທີ່ໃຫ້ຄວາມຊ່ວຍເຫຼືອດ້ານຕ່າງໆໃນການເຮັດ

## 6. ບົດຄັດຫຍໍ້ (Abstract)

ບົດຄັດຫຍໍ້ເປັນສ່ວນທີ່ເວົ້າເຖິງເນື້ອໃນຫຍໍ້ຂອງບົດວິໄຈໂດຍສະຫຼຸບເນື້ອໃນສຳຄັນຂອງການຄົ້ນຄວ້າໃຫ້ສັ້ນ, ກະທັດຮັດ, ຊັດເຈນປະກອບດ້ວຍຈຸດປະສົງ, ຂອບເຂດຂອງການວິໄຈ, ວິທີດຳເນີນການວິໄຈ, ຜົນການວິໄຈ ແລະ ຂໍ້ ສະເໜີແນະ ໂດຍຂຽນເປັນຄວາມລຽງຕໍ່ເນື່ອງໃຫ້ລຽງບົດຄັດຫຍໍ້ພາສາລາວຂຶ້ນກ່ອນສ່ວນ ໜ້າທັດໄປໃຫ້ເປັນບົດຄັດຫຍໍ້ ພາສາອັງກິດໂດຍບົດຄັດຫຍໍ້ມີຄວາມຍາວບໍ່ເກີນ 1 ໜ້າເຈ້ຍຂະໜາດຕົວອັກສອນ ຂະໜາດ 12 .

## 7. ສາລະບານ (Contents)

ເປັນສ່ວນທີ່ບອກໃຫ້ຮູ້ເຖິງລຳດັບໜ້າຂອງສ່ວນປະກອບສຳຄັນທັງໝົດມີຢູ່ໃນບົດວິໄຈແຕ່ລະບົດ, ແຕ່ລະເລື່ອງເລີ່ມຕົ້ນຈາກໜ້າໃດຊ່ວຍໃຫ້ຄວາມສະດວກໃນການຄົ້ນຫາເລື່ອງຫຼືບົດທີ່ຕ້ອງການ

ໜ້າປົກນອກສີເຫຼືອງ

ສູງ 5.89 ຊມ
ກວ້າງ 3.64 ຊມ

ຕົວໜັງສືຂະໜາດ 18 ເຂັ້ມ

ຫົວບົດພາສາລາວ ຕົວໜັງສືຂະໜາດ 16 ເຂັ້ມ

**ໂຄງການຂຽນບົດຈົບຊັ້ນປະລິນຍາຕີ**

**ສາຍຄູ.......................................**

**ສຶກສາ ການຈັດການຮຽນການສອນ ໃນວິທະຍາໄລຄູສົງອົງຕື້**

**The INSTRUCTIONAL MANAGEMENT OF ONGTUE** TRAINING **COLLEGE**

ລົງແຖວ 8 ບັນທັດ

ຕົວໜັງສືຂະໜາດ 14 ເຂັ້ມ

**ພຣະ..............................**

ລົງແຖວ 7 ບັນທັດ

ຕົວໜັງສືຂະໜາດ 16 ເຂັ້ມ

ຕົວໜັງສືຂະໜາດ14

ໂຄງການຂຽນບົດຈົບຊັ້ນເປັນສ່ວນໜຶ່ງໃນຫຼັກສູດການສຶກສາລະດັບປະລິນຍາຕີ (12+4)

ຂອງສາຍຄູ: .......................... (ຮຸ່ນທີ 21) ວິທະຍາໄລຄູສົງອົງຕື້ສຶກສຶກສາ 2020-2021

ສຶກສາ ການຈັດການຮຽນການສອນ ໃນວິທະຍາໄລຄູສົງອົງຕື້

THE INSTRUCTIONAL MANAGEMENT OF ONGTUE TRAINING COLLEGE

ໜ້າປົກໃນສີຂາວ

ລົງແຖວ 11 ບັນທັດ

ຕົວໜັງສືຂະໜາດ 14+ ເຂັ້ມ

ພຣະ....................................

ຄູທີ່ປຶກສາ................................

ລົງແຖວ 11 ບັນທັດ

ຕົວໜັງສືຂະໜາດ14

ໂຄງການຂຽນບົດຈົບເປັນສ່ວນໜຶ່ງໃນຫຼັກສູດການສຶກສາລະດັບປະລິນຍາຕີ (12+4)

ຂອງສາຍຄູ: ...................... (ຮຸ່ນທີ 21) ວິທະຍາໄລຄູສົງອົງຕື້ສົກສຶກສາ 2020-2021

## ຂ. ສ່ວນປະກອບເນື້ອໃນ

ສ່ວນປະກອບເນື້ອໃນຂອງບົດວິໄຈຈະແບ່ງອອກເປັນ 5 ບົດ ເນື້ອໃນຂອງແຕ່ລະບົດຈະມີຄວາມແຕກຕ່າງກັນໄປ ຕາມລັກສະນະຂອງເນື້ອໃນ ແລະ ແບບແຜນການວິໄຈແຕ່ລະສາຍຮຽນ, ສ່ວນທີ່ເປັນເນື້ອໃນສຳຄັນຂອງບົດວິໄຈ ສ່ວນໃຫຍ່ປະກອບດ້ວຍບົດນຳ, ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ, ວິທີດຳເນີນການວິໄຈ, ຜົນການວິໄຈ, ສະຫຼຸບແລະ ອະທິບາຍຜົນໄດ້ຮັບໂດຍມີລາຍລະອຽດແຕ່ລະສ່ວນດັ່ງນີ້

**<u>ຮ່າງທີ 22:</u>**

### ໂຄງຮ່າງບົດວິໄຈ

### ບົດທີ 1

### ປະກອບມີ ບົດນຳ

1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ

1.2.ຈຸດປະສົງຂອງການວິໄຈ

1.3 ສົມມຸດຕິຖານໃນການວິໄຈ

1.4. ຂອບເຂດການສຶກສາ

1.5. ປະໂຫຍດຄາດວ່າຈະໄດ້ຮັບ

1.6.ນິຍາມສັບສະເພາະ

### ບົດທີ 2

### ທິດສະດີທີ່ກ່ຽວຂ້ອງ ,ແນວຄິດ, ເອກະສານ ແລະ ບົດຄົ້ນຄວ້າ

2. ທິດສະດີທີ່ກ່ຽວກັບວິທີການຕ່າງໆເຊັ່ນການກຳນົດບັນຫາການວິໄຈ, ແນວຄິດ, ເອກສານ, ທິດສະດີທີ່ກ່ຽວກັບຕົວປ່ຽນ.

### ບົດທີ 3

ວິທີດຳເນີນການວິໄຈ

ໃນບົດນີ້ຈະເວົ້າເຖິງວິທີຄົ້ນຄວ້າ,ຂັ້ນຕອນການຄົ້ນຄວ້າໂດຍລະອຽດຕັ້ງແຕ່ຕົ້ນຈົນການຄົ້ນຄວ້າສຳເລັດສົມບູນ ວ່າມີຂັ້ນຕອນເຮັດຫຍັງແດ່, ເຮັດແນວໃດ, ແຕ່ລະຂັ້ນຕອນໃຊ້ເອກະສານຂໍ້ມູນ ຫຼືເຄື່ອງມືປະເພດໃດ, ຊະນິດໃດ, ເອກະສານ ຫຼືເຄື່ອງມືນັ້ນໆໄດ້ແນວໃດ, ດ້ວຍວິທີໃດ,

1. **ປະຊາກອນ ແລະກຸ່ມຕົວຢ່າງ**

ກຳນົດປະຊາກອນຊັດເຈນບອກຈຳນວນກຸ່ມຕົວຢ່າງ, ການກຳນົດ ແລະ ວິທີການສຸ່ມກຸ່ມເປົ້າຫມາຍທີ່ຕ້ອງການສຶກສາ

## 2. ການສ້າງ ເຄື່ອງມື

1. ແບບສອບຖາມ
2. ແບບປະເມີນ

**3. ເກນການແປຄວາມໝາຍຂອງຄະແນນ**

1. ຄະແນນຈາກມາດຕາສ່ວນ (5,4,3,2,1) ແລະອື່ນໆ

2. ຄະແນນຈາກການວິເຄາະ

- ເປີເຊັນ
- ຄ່າສະເລ່ຍ

**4. ການເກັບກຳຂໍ້ມູນ**

**5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ**

## ບົດທີ 4

ຜົນການວິເຄາະຂໍ້ມູນ ແລະ ການອະທິບາຍຜົນ ປະກອບດ້ວຍ:

1) ການລາຍງານຜົນການຄົ້ນຄວ້າ, ໂດຍນຳສະເຫນີໃນຮູບເນື້ອໃນ, ຕາຕະລາງ, ຄວນມີການຈັດລຽງຕາມລຳດັບຢ່າງຕໍ່ເນື່ອງເໝາະສົມ.

2) ການອະທິບາຍຜົນ ເມື່ອລາຍງານຜົນການຄົ້ນຄວ້າທີໄດ້ ຄວນອະທິບາຍຜົນການຄົ້ນຄວ້າຕໍ່ທັນທີ, ໝາຍເຫດ:ຖ້າເປັນບົດຈົບຊັ້ນແບບປະລິມານ ແຈກແຈງຄວາມຄວາມຖີ່ ສະແດງຕາຕະລາງທົ່ວໄປຂອງຂໍ້ມູນເປັນຕົວເລກ ໃຫ້ສະຫຼຸບຜົນໄດ້ຮັບໃນຕາຕະລາງແຕ່ບໍ່ຈຳເປັນອະທິບາຍຜົນ

## ບົດທີ 5
## ສະຫຼຸບຜົນ ແລະ ຂໍ້ສະເໜີ

5. 1 ສະຫຼຸບຜົນການຄົ້ນຄວ້າ ໂດຍໃຫ້ລາຍລະອຽດສັ້ນໆກ່ຽວວກັບເລື່ອງທີ່ສຶກສາ, ຈຸດປະສົງ, ຂໍ້ສົມມຸດຕິຖານ(ຖ້າມີ) ເຄື່ອງມືທີ່ໃຊ້ ວິທີເກັບບຣວບຣວມຂໍ້ມູນ ແລະ ຜົນກຳນຄົ້ນຄວ້າໂດຍສະຫຼຸບ. ຜົນກຳນຄົ້ນຄວ້າທີ່ນຳສະເຫນີໃນບົດນີ້ ສາມາດຂຽນເປັນຂໍ້ໆ ເພື່ອຄວາມສະດວກໃນການອາ່ນ, ບົດສະຫຼຸບຜົນການຄົ້ນຄວ້າ

5.2 ໃນການສະຫຼຸບຜົນວິເຄາະໃຫ້ເອົາຜົນອະທິບາຍຜົນ ໂດຍໃຫ້ສອດຄ່ອງກັບຈຸດປະສົງຂອງການວິໄຈ ອະພິປາຍຜົນຕາມສົມມຸດຖານຫຼືຄຳຖາມການວິໄຈ

5.3) ການນຳເອົາຜົນການຄົ້ນຄວ້າໄປນຳໃຊ້ ໃນສ່ວນນີ້ ຜູ້ຄົ້ນຄວ້າຈະໃຫ້ຂໍ້ສະເຫນີ ໂດຍຍຶດເອົາຜົນການສຶກສາຄົ້ນຄວ້າທີ່ໄດ້ເປັນຫຼັກໃນການໃຫຂໍ້ສະເຫນີແນະແນວທາງແກ້ໄຂ

**6. ເອກະສານອ້າງອີງ.**

ແມ່ນເອກະສານທີ່ຄັດເອົາເນື້ອໃນຈຳນວນໜຶ່ງເຂົ້າໃນບົດໂຄງການຈົບຊັ້ນ, ເອກະສຳນອ້າງອີງຈະຕ້ອງມີຄົບຊື່ຜູ້ຂຽນ   ປີຂຽນບົດ ໃຫ້ຈັດເອກະສານອ້າງອີງຕຳມຕົວ ອັກສອນ ກ, ຂ,ຄ. ຖ້າເປັນເອກະສານຕ່າງປະເທດ ໃຫ້ຈັດລຽນຕາມ ອັກສອນ A, B, C, D……. ນຳມາຈັດລຽນໄວ້ທ້າຍເຫລັ້ມ.

7. **ປະຫວັດຫຍໍ້ຂອງຜູ້ຂຽນ.**

## ພາກທີ III

## ການພິມບົດຈົບຊັ້ນ

ຕ້ອງສຶກສາຂໍ້ກຳນົດ ແລະ ຮູບແບບຂອງບົດຕາມຄູ່ມືການເຮັດບົດຈົບຊັ້ນໃຫ້ເຂົ້າໃຈຢ່າງລະອຽດ ກ່ອນຈຶ່ງລົງມືພິມ ຫາກມີຂໍ້ຂ້ອງໃຈກໍ່ຄວນປຶກສາກັບອາຈານທີ່ປຶກສາ

**1. ເຈ້ຍທີ່ໃຊ້ພິມ**

ໃຊ້ເຈ້ຍສີຂາວ, ຂະໜາດມາດຕະຖານ A4 ຂະໜາດ 80g ໃຊ້ພິມພຽງໜ້າດຽວ

## 2. ຕົວພິມ ແລະ ໄລຍະຂອງແຖວ

ໃຊ້ພິມດ້ວຍໂປຣແກຣມການພິມ (Microsoft Words) ແລະ ໃຊ້ເຄື່ອງພິມ ຕົວພິມຄວນເປັນແບບດຽວກັນ ໃນການພິມບົດຈົບຊັ້ນນີ້ໃຫ້ໃຊ້ຊະນິດ ແລະ ຂະໜາດຕົວອັກສອນດັ່ງຕາຕະລາງທີ 1

**ຕາຕະລາງທີ 1** ຊະນິດ ແລະ ຂະໜາດຕົວອັກສອນທີ່ໃຊ້ໃນການພິມບົດບົດວິໄຈພາສາລາວ ແລະ ພາສາອັງກິດ

| ຊະນິດແລະຂະໜາດຕົວອັກສອນ | ບົດວິໄຈພາສາລາວ | ບົດວິໄຈພາສາອັງກິດ |
|---|---|---|
| 1.ຊະນິດຕົວອັກສອນ | 1.Phetsarath OT | ອັກສອນພາສາອັງກິດທີ່ມີຢູ່ໃນບົດໃຫ້ໃຊ້ Times New Roman |
| 2.ຂະໜາດຂອງຕົວອັກສອນທີ່ເປັນພິມ | 12. Poin | 12 (Point) |
| 3. ຂະໜາດຕົວອັກສອນຂອງບົດທີແລະຊື່ບົດຕົວພິມໃຫຍ່ | 14(Point) ຕົວໜາ | 14(Point) ຕົວໜາ |
| 4. ຫົວຂໍ້ສຳຄັນ ແລະ ຕົວພິມນ້ອຍ | 12(Point) ຕົວໜາ | 12(Point) ຕົວໜາ |
| 5. ຫົວຂໍ້ຍ່ອຍ ແລະ ຕົວພິມນ້ອຍ | 12(Point) ຕົວໜາ | 12(Point) ຕົວໜາ |
| 6. ໄລຍະຂອງແຖວປົກກະຕິ | single | 1.00 |

## 3. ການຕັ້ງຄ່າໜ້າຂອບເຈ້ຍ

- ດ້ານເທິງ ແລະ ຂວາຫ່າງຈາກຂອບເຈ້ຍ 2. cm
- ດ້ານຊ້າຍຫ່າງຈາກຂອບເຈ້ຍ 3. cm
- ດ້ານລຸ່ມຫ່າງຈາກຂອບເຈ້ຍ  2. cm

## 4.ການພິມຫົວຂໍ້ຍ່ອຍ

1. ຫົວຂໍ້ຍ່ອຍນີ້ຕັ້ງ Tabໃນໄລຍະ 0.63 ນີ້ວຫຼື 1.60 cm

    1.1 ທີຫົວຂໍ້ຍ່ອຍນີ້ຕັ້ງ Tabໃນໄລຍະ0.81 ນີ້ວຫຼື 2.06cm

        1.1.1 ຫົວຂໍ້ຍ່ອຍນີ້ຕັ້ງ Tabໃນໄລຍະ1.00 ນີ້ວ ຫຼື 2.54 cm

            1.1.1 ຫົວຂໍ້ຍ່ອຍນີ້ຕັ້ງ Tabໃນໄລຍະ1.19 ນີ້ວຫຼື 3.02 cm

            1.1.1.1 ຫົວຂໍ້ຍ່ອຍນີ້ຕັ້ງ Tabໃນໄລຍະ 1.38 ນີ້ວຫຼື 3.50 cm

## ເອກະສານອ້າງອີງ

1. ຄູ່ມືຝຶກຫັດວິຊາຊີບຄູ ກະຊວງສຶກສາທິການ ແລະ ກິລາ (ກົມສ້າງຄູ).
2. ໜັງສືແນະນຳວ່າດ້ວຍການຂຽນບົດວິທະຍານິພົນ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ສະບັບເລກທີ 012/ສວດສ-ສມປຊ, ລົງວັນທີ 18/01/2017.
3. ຄູ່ມືແນະນຳການຂຽນບົດໂຄງການຈົບຊັ້ນຂອງມະຫາວິທະຍາໄລແຫ່ງຊາດ.

# ຄຳນຳ

ປຶ້ມຄູ່ມືຝຶກຫັດວິຊາຊີບຄູ ເຫຼັ້ມນີ້ໄດ້ຮຽບຮຽງຂຶ້ນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການອັນຈຳເປັນ ແລະ ຮີບດ່ວນ ໃນການຝຶກຫັດວິຊາຊີບຄູ ຂອງນັກສຶກສາວິທະຍາໄລຄູສົງອົງຕື້ ປີສຸດທ້າຍຂອງລະບົບ 12+4 ໃຫ້ເປັນໄປຕາມແຜນການຍຸດທະສາດ ໃນການພັດທະນາການສຶກສາ ທີ່ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ວາງອອກ, ພ້ອມນີ້ກໍ່ເພື່ອເປັນແນວທາງໃນການປະຕິບັດໜ້າທີ່ຂອງຄະນະຮັບຜິດຊອບວຽກງານຝຶກຫັດວິຊາຊີບຄູແຕ່ລະພາກສ່ວນ ແລະ ນັກສຶກສາຄູຝຶກຫັດໃຫ້ມີປະສິດທິຜົນສູງ.

ເນື້ອໃນປຶ້ມຄູ່ມືເຫຼັ້ມນີ້ໄດ້ຄັດຈາກປຶ້ມຄູ່ມືຝຶກຫັດວິຊາຊີບ ສາຍຄູມັດທະຍົມ ກຸ່ມວິທີສອນລະບົບ 12+2 ແລະ 12+4 ຂອງກົມສ້າງຄູ ທີ່ໄດ້ໃຊ້ໃນປີຜ່ານມາ 2013-2014 ແລະ ໄດ້ປັບປຸງເສີມຂະຫຍາຍບາງເນື້ອໃນໃຫ້ຄົບຖ້ວນສົມບູນຂຶ້ນຕື່ມ ເພື່ອໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງໂຮງຮຽນສົງ.

ການຝຶກຫັດວິຊາຊີບຄູແມ່ນວິຊາຮຽນໜຶ່ງທີ່ບັນຈຸຢູ່ກຸ່ມວິທີສິດສອນທີ່ກຳນົດໄວ້ໃນຫຼັກສູດ, ເປັນການສືບຕໍ່ຈາກວິຊາປະສົບການໃນໂຮງຮຽນ 1,2,3 ລວມມີ 12 ໜ່ວຍກິດ, ປະກອບດ້ວຍວຽກງານ 4 ດ້ານຄື: ວຽກສິດສອນ, ວຽກຄູປະຈຳຫ້ອງ, ວຽກຊຸມຊົນ ແລະ ວຽກງານວິໄຈໃນຫ້ອງຮຽນ; ແນໃສ່ເພື່ອໃຫ້ນັກສຶກສາຄູຝຶກຫັດໄດ້ຝຶກແອບດ້ານວິຊາຊີບ - ວິຊາສະເພາະ, ທັງແມ່ນການທົດສອບທາງດ້ານທິດສະດີດ້ວຍພາກປະຕິບັດຕົວຈິງ ເພື່ອເຮັດໃຫ້ພາກທິດສະດີກັບພາກປະຕິບັດຕົວຈິງສອດຄ່ອງກັນ ພ້ອມທັງເປັນການປັບປຸງກໍ່ສ້າງໂລກະທັດ, ຊີວະທັດ, ທັດສະນະຫຼັກໝັ້ນຊົນຊັ້ນໃຫ້ຖືກຕ້ອງ ເພື່ອກຽມພ້ອມເຂົ້າສູ່ການປະຕິບັດໜ້າທີ່ວຽກງານ ໃນຂັ້ນຕໍ່ໄປໃຫ້ໄດ້ຮັບຜົນດີ.

ເຖິງຢ່າງໃດກໍຕາມການຮຽບຮຽງປຶ້ມຄູມືເຫຼັ້ມນີ້ກໍ່ປາສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງບໍ່ວ່າທາງດ້ານເນື້ອໃນ ແລະ ຮູບການ ພວກເຮົາຍິນດີ ແລະ ພ້ອມແລ້ວທີ່ຈະຮັບເອົາຄຳຄິດຄຳເຫັນ, ຄຳຕຳນິຕິຊົມຈາກບັນດາທ່ານຜູ້ຊົມໃຊ້ເພື່ອນຳໄປປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າ.

ຂໍຂອບໃຈ